ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ກະຊວງແຜນການ ແລະ ການລົງທຶນ** **ເລກທີ : 0022 /ກຜທ**

**ນະຄອນຫຼວງວຽງຈັນ, ວັນທີ 2 ມັງກອນ 2019**

# ຄໍາແນະນໍາ
# ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈໍາປີ 2019

- ອີງຕາມ ກົດໝາຍວ່າດ້ວຍການລົງທຶນຂອງລັດສະບັບເລກທີ 72/ສພຊ, ລົງວັນທີ 15 ທັນວາ 2015.
- ອີງໃສ່ດໍາລັດນາຍົກລັດຖະມົນຕີສະບັບເລກທີ 201/ນຍ, ລົງວັນທີ 19 ທັນວາ 2016 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງແຜນການ ແລະ ການລົງທຶນ.
- ອີງຕາມມະຕິເລກທີ 099/ສພຊ, ລົງວັນທີ 28 ພະຈິກ 2018 ກອງປະຊຸມສະພາແຫ່ງຊາດວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈໍາປີ 2018 ແລະ ທິດທາງແຜນການປະຈໍາປີ 2019.
- ອີງຕາມດໍາລັດນາຍົກລັດຖະມົນຕີ ສະບັບເລກທີ 560/ນຍ, ລົງວັນທີ 31 ທັນວາ 2018 ວ່າດ້ວຍການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນງົບປະມານແຫ່ງລັດ ປະຈໍາປີ 2019.

## ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ອອກຄໍາແນະນໍາ ດັ່ງນີ້:

## I. ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນການລົງທຶນ ປະຈໍາປີ 2019

### 1. ການເຕີບໂຕທາງດ້ານເສດຖະກິດ

ເພື່ອສືບຕໍ່ເຮັດໃຫ້ທົ່ວປະເທດ ແລະ ສັງຄົມ ມີສະຖຽນລະພາບທາງດ້ານການເມືອງ, ຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍ ເປັນພື້ນຖານໃຫ້ແກ່ການພັດທະນາຮອບດ້ານ, ຮັກສາສະຖຽນລະພາບຂອງເສດຖະກິດມະຫາພາກໃຫ້ມີຄຸນນະພາບ, ໝັ້ນທ່ຽງ, ເຂັ້ມແຂງ ແລະ ຍືນຍົງ ພ້ອມທັງເຮັດໃຫ້ເສດຖະກິດເຕີບໂຕຢ່າງຕໍ່ເນື່ອງບໍ່ຫຼຸດ 6,7% ແລະ ສ້າງມູນຄ່າເພີ່ມຕາມລາຄາໃນປີໃຫ້ໄດ້ປະມານ 165.475 ຕື້ກີບ, ລາຍໄດ້ສະເລ່ຍຕໍ່ຫົວຄົນ 2.726 ໂດລາສະຫະລັດ, ຄິດໄລ່ເປັນ GNI ລາຍໄດ້ແຫ່ງຊາດຈະມີມູນຄ່າ 2.317 ໂດລາສະຫະລັດຂະແໜງກະສິກໍາເພີ່ມຂຶ້ນ 2,8%; ຂະແໜງອຸດສະຫະກໍາເພີ່ມຂຶ້ນ 8,3%; ຂະແໜງການບໍລິການເພີ່ມຂຶ້ນ 6,6%; ພາສີຈາກການນໍາເຂົ້າສິນຄ້າ ແລະ ການບໍລິການເພີ່ມຂຶ້ນ 7,0%. ດັ່ງນັ້ນ, ບັນດາຂະແໜງການ ແລະ ທ້ອງຖິ່ນ ຕ້ອງໄດ້ເອົາໃຈໃສ່ບາງໜ້າວຽກຈຸດສຸມ ດັ່ງນີ້:

**(1)** ຂະແໜງການ ແລະ ທ້ອງຖິ່ນ ຕ້ອງໄດ້ເພີ່ມທະວີການປະສານສົມທົບກັນຢ່າງແໜ້ນແຟ້ນ ໃນການຊຸກຍູ້, ສົ່ງເສີມຂະແໜງການທີ່ມີທ່າແຮງແລ້ວ ແລະ ທ່າແຮງບົ່ມຊ້ອນ ເພື່ອຍູ້ແຮງບັນດາໂຄງການລະດັບຊາດທີ່ໄດ້ເຊັນສັນຍາແລ້ວ ແລະ ກໍາລັງຢູ່ໃນຂັ້ນຕອນການຈັດຕັ້ງປະຕິບັດໃຫ້ປະຕິບັດຕາມແຜນທີ່ວາງໄວ້ ເປັນຕົ້ນ: ໂຄງການກໍ່ສ້າງທາງລົດໄຟລາວ-ຈີນ ຄາດວ່າຈະສໍາເລັດຫຼາຍກວ່າ 60%, ໂຄງການກໍ່ສ້າງທາງດ່ວນຕ່າງໆ, ການກໍ່ສ້າງພື້ນຖານໂຄງລ່າງໃນເຂດພັດທະນາເມືອງໃໝ່ສີທັນດອນ ແລະ ການກໍ່ສ້າງພື້ນຖານໂຄງລ່າງໃນເຂດເສດຖະກິດພິເສດຕ່າງໆ, ການກໍ່ສ້າງເຂື່ອນ

ໄຟຟ້າ 12 ເຂື່ອນໃຫ້ສໍາເລັດ ເພື່ອຜະລິດກະແສໄຟຟ້າໃຫ້ໄດ້ປະມານ 11,88 ຕື້ກິໂລວັດໂມງ, ການຜະລິດແຮ່ທາດເປັນຕົ້ນ: ແຮ່ຄໍາ, ທອງແດງ, ແຮ່ກົ່ວ, ແຮ່ບົກຊິດຢູ່ແຂວງເຊກອງ ທີ່ຄາດວ່າຈະມີການຂຸດຄົ້ນປຸງແຕ່ງ ແລະ ສົ່ງອອກເພີ່ມຂຶ້ນໃຫ້ບັນລຸໄດ້ມູນຄ່າ 11.868 ຕື້ກີບ. ນອກຈາກນີ້ ກໍ່ໃຫ້ເອົາໃຈໃສ່ຊຸກຍູ້ສົ່ງເສີມ ແລະ ຕິດຕາມໃນເຂດເສດຖະກິດພິເສດທີ່ບັນດາກິດຈະກໍາຕ່າງໆ ຄາດວ່າຈະເລີ່ມທໍາການຜະລິດໃນປີ 2019 ນີ້ເປັນຕົ້ນ: ໂຮງງານຜະລິດປຸງແຕ່ງນໍ້າມັນແອັດຊັງ, ກາຊວນ, ອາຍແກັດ ແລະ ອື່ນໆ, ໂຮງງານຜະລິດນໍ້າຫອມ ແລະ ໂຮງງານຕັດຫຍິບຢູ່ເຂດໄຊເສດຖາກວມລວມ; ການຜະລິດຢູ່ເຂດເສດຖະກິດພິເສດການຄ້າວຽງຈັນ-ໂນນທອງ, ເຂດເສດຖະກິດພິເສດສະຫວັນ-ເຊໂນ ແລະ ອື່ນໆ.

(2) ເອົາໃຈໃສ່ປັບປຸງ ແລະ ຟື້ນຟູບັນດາພື້ນຖານໂຄງລ່າງ ແລະ ສິ່ງອໍານວຍຄວາມສະດວກທີ່ໄດ້ຮັບຜົນເສຍຫາຍຈາກໄພທໍາມະຊາດໃນກາງປີ 2018 ເປັນຕົ້ນ: ລະບົບຊົນລະປະທານ, ຈັກສູບນໍ້າ, ເໜືອງຝາຍ ໃຫ້ໄດ້ຮັບການປັບປຸງສ້ອມແປງ ແລະ ນໍາໃຊ້ເຂົ້າໃນການຜະລິດໂດຍໄວ ເພື່ອຮັບໃຊ້ການຜະລິດນາແຊງ ໃຫ້ໄດ້ 100.000 ເຮັກຕາ ແລະ ເຮັດໃຫ້ສາມາດຂະຫຍາຍການຜະລິດໃຫ້ຫຼາຍຂຶ້ນ ຄຽງຄູ່ກັບການຍົກລະດັບທາງດ້ານເຕັກນິກວິຊາການ ລວມທັງການສະໜອງປັດໃຈການຜະລິດ ເປັນຕົ້ນ: ແນວພັນເຂົ້າ, ຝຸ່ນ, ປຸ໋ຍ ແລະ ປັດໄຈການຜະລິດອື່ນໆ ໃນຂອບເຂດທົ່ວປະເທດ ເພື່ອເຮັດໃຫ້ຜົນຜະລິດເພີ່ມຂຶ້ນທາງດ້ານປະລິມານ ແລະ ຄຸນນະພາບ ຊຸກຍູ້ສົ່ງເສີມເຮັດໃຫ້ການຂະຫຍາຍເນື້ອທີ່ການຜະລິດເຂົ້າໃຫ້ເພີ່ມຂຶ້ນຫຼາຍກວ່າປີທີ່ຜ່ານມາ ແລະ ການທໍາການຜະລິດດ້ວຍຮູບແບບກະເສດສຸມ ເພື່ອເຮັດໃຫ້ປະສິດທິພາບໃນການຜະລິດສູງຂຶ້ນໃນເຂດທີ່ມີທ່າແຮງ ເປັນຕົ້ນຢູ່ເຂດທົດລອງປູກເຂົ້າໃນແຂວງສະຫວັນນະເຂດ ແລະ ຄໍາມ່ວນ.

(3) ສືບຕໍ່ເອົາໃຈໃສ່ຕັ້ງປະຕິບັດບັນດານິຕິກໍາຕ່າງໆ ທີ່ລັດຖະບານໄດ້ວາງອອກຢ່າງເຂັ້ມງວດ ເປັນຕົ້ນ: ຄໍາສັ່ງ 09/ນຍ ວ່າດ້ວຍການປະຢັດລາຍຈ່າຍງົບປະມານຂອງລັດ,ຄໍາສັ່ງເລກທີ 02/ນຍ ວ່າດ້ວຍການປັບປຸງບັນດາລະບຽບການ ແລະ ກົນໄກປະສານງານໃນການດໍາເນີນທຸລະກິດ ຄຽງຄູ່ກັບການຜັນຂະຫຍາຍນະໂຍບາຍ 3 ເປີດ (ເປີດປະຕູ, ເປີດສິ່ງກີດຂວາງ ແລະ ເປີດໃຈ) ໂດຍທຸກພາກສ່ວນຕ້ອງເອົາໃຈໃສ່ເປີດສິ່ງກີດຂວາງທີ່ເຫັນວ່າເປັນບັນຫາໃນຂົງເຂດຕົນເອງຮັບຜິດຊອບ; ຄໍາສັ່ງເລກທີ 12/ນຍ ວ່າດ້ວຍການຈັດຕັ້ງປະຕິບັດ 8 ມາດຕະການຊຸກຍູ້ເສດຖະກິດ; ຄໍາສັ່ງເລກທີ 15/ນຍ; ຄໍາສັ່ງນາຍົກລັດຖະມົນຕີເລກທີ 08/ນຍ, ລົງວັນທີ 02 ກໍລະກົດ 2018 ວ່າດ້ວຍການເພີ່ມທະວີການຄຸ້ມຄອງກິດຈະການແຮ່ທາດໃນສປປ ລາວ ແລະ ຄໍາສັ່ງເລກທີ 09/ນຍ, ລົງວັນທີ 02 ກໍລະກົດ 2018 ວ່າດ້ວຍການເພີ່ມທະວີການຄຸ້ມຄອງການນໍາໃຊ້ເນື້ອທີ່ດິນ ເພື່ອສໍາປະທານປູກໄມ້ອຸດສາຫະກໍາ ແລະ ພືດຕ່າງໆໃນຂອບເຂດທົ່ວປະເທດ, ເຊິ່ງນໍາໃຊ້ປ່ຽນແທນຄໍາສັ່ງນາຍົກ ເລກທີ 13/ນຍ ແລະ ນິຕິກໍາອື່ນໆ ເພື່ອຮັກສາຈັງຫວະການເຕີບໂຕທາງດ້ານເສດຖະກິດໃຫ້ຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ຢູ່ໃນທ່ວງທ່າທີ່ດີຂຶ້ນ.

(4) ສືບຕໍ່ໂຄສະນາເຜີຍແຜ່ກິດຈະກໍາຕ່າງໆ ກ່ຽວກັບປີທ່ອງທ່ຽວແຫ່ງຊາດ ເພື່ອສະໜັບສະໜູນການເປີດປີທ່ອງທ່ຽວລາວ-ຈີນ ຢ່າງກວ້າງຂວາງ ພ້ອມທັງປັບປຸງຂອດການບໍລິການທີ່ເປັນການສ້າງຄວາມຫຍຸ້ງຍາກໃນການອໍານວຍຄວາມສະດວກແກ່ນັກທ່ອງທ່ຽວ ຄຽງຄູ່ກັບການສ້າງ ແລະ ພັດທະນາແຫຼ່ງທ່ອງທ່ຽວທີ່ຕິດພັນກັບການອະນຸລັກທາງດ້ານປະຫວັດສາດ, ວັດທະນາທໍາ ແລະ ທໍາມະຊາດ ໂດຍການມີສ່ວນຮ່ວມຂອງປະຊາຊົນ ເພື່ອຮັບປະກັນເຮັດໃຫ້ນັກທ່ອງທ່ຽວເຂົ້າມາປະເທດໃຫ້ໄດ້ 4,5 ລ້ານເທື່ອຄົນ ແລະ ນໍາເງິນຕາຈາກການທ່ອງທ່ຽວເຂົ້າມາປະເທດ ປະມານ 700 ລ້ານໂດລາສະຫະລັດ.

(5) ບັນດາຂະແໜງການ ແລະ ທ້ອງຖິ່ນ ອີງໃສ່ເປົ້າໝາຍ, ວຽກຈຸດສຸມ, ທິດທາງໜ້າທີ່ ແລະ ຄາດໝາຍສູ້ຊົນທີ່ກໍານົດໄວ້ໃນມະຕິສະພາແຫ່ງຊາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ຜັນຂະຫຍາຍເປັນອັນລະອຽດ ໃນແຜນພັດທະນາເສດຖະກິດ-ສັງຄົມ ປະຈໍາປີ 2019 ຂອງຂະແໜງການ ແລະ ທ້ອງຖິ່ນຕົນ ໃຫ້ມີຄວາມສອດຄ່ອງ, ມີການປະສານງານກັນຕາມແຜນວຽກ, ແຜນເງິນ ແລະ ແຜນຄົນໃຫ້ສອດຄ່ອງກົມກຽວກັນ; ພ້ອມທັງກໍານົດໄລຍະເວລາ ແລະ ຜູ້ຮັບຜິດຊອບຈັດຕັ້ງປະຕິບັດແຕ່ລະວຽກງານ ແລະ ໂຄງການຢ່າງຈະແຈ້ງ ເພື່ອສະດວກໃນການຕິດຕາມ, ກວດກາ, ຕີລາຄາ ແລະ ປະເມີນຜົນໄດ້ຮັບໃນແຕ່ລະໄລຍະ ເພື່ອລາຍງານການນໍາໃນແຕ່ລະຂັ້ນ ດ້ວຍຄວາມຮັບຜິດຊອບສູງ.

(6) ຂະແໜງການ ແລະ ທ້ອງຖິ່ນ ຕາມສາຍຕັ້ງຂອງຂະແໜງແຜນການຄື: ກົມແຜນການ/ຫ້ອງການຂອງບັນດາກະຊວງ, ອົງການທຽບເທົ່າ; ພະແນກແຜນການ ແລະ ການລົງທຶນແຂວງ, ນະຄອນຫຼວງວຽງຈັນ; ຫ້ອງການແຜນການຂັ້ນເມືອງ ເພີ່ມທະວີຄວາມເອົາໃຈໃສ່ໃນການລົງຊຸກຍູ້, ຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຕາມສາຍຕັ້ງຂະແໜງການສັງກັດຂອງຕົນເປັນແຕ່ລະງວດ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດໄປຕາມແຜນ ແລະ ບັນລຸໄດ້ຕາມລະດັບຄາດໝາຍທີ່ວາງໄວ້.

(7) ເພື່ອເຮັດໃຫ້ການຈັດຕັ້ງແຜນພັດທະນາເສດຖະກິດ-ສັງຄົມປີ 2019 ທັນຕາມກຳນົດເວລາ, ໄລຍະເວລາໃນການຈັດຕັ້ງປະຕິບັດແຜນຕ້ອງໄດ້ເລີ່ມແຕ່ວັນທີ 1 ມັງກອນ ຈົນເຖິງວັນທີ 31 ທັນວາ 2019.

## 2. ການຈັດຕັ້ງປະຕິບັດແຜນການລົງທຶນ ປະຈຳປີ 2019

### 2.1. ໂຄງສ້າງການລົງທຶນລວມ

ປະຕິບັດການລົງທຶນທັງໝົດໃຫ້ໄດ້ຕາມແຜນ 44.347,30 ຕື້ກີບ ຫຼື ເທົ່າກັບ 26,80% ຂອງ GDP ໃນນັ້ນ:

1) ການລົງທຶນຂອງລັດຈາກງົບປະມານພາຍໃນ 4.359,82 ຕື້ກີບ ກວມເອົາ 9,83% ຂອງທຶນລວມທັງໝົດ (ເທົ່າກັບ 2,63% ຂອງ GDP) ໃນນັ້ນ:

(1)ການລົງທຶນບ້ວງສະເພາະ ແລະ ບ້ວງປົກກະຕິລວມທັງໝົດ 2.450 ຕື້ກີບ ກວມເອົາ 56,20% ຂອງການລົງທຶນຈາກງົບປະມານພາຍໃນ (ກວມເອົາ 5,52% ຂອງທຶນລວມທັງໝົດ) ໄດ້ຈັດສັນ ດັ່ງນີ້:

ກ. ບ້ວງລົງທຶນສະເພາະຈຳນວນ 850 ຕື້ກີບ ເທົ່າກັບ 19,50% ຂອງການລົງທຶນຈາກງົບປະມານພາຍໃນ ໃນນັ້ນ:

- ຟື້ນຟູໄພພິບັດຫຼັງນ້ຳຖ້ວມ 500 ຕື້ກີບ;
- ຊົດເຊີຍໃຫ້ປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການທາງລົດໄຟລາວ-ຈີນ 250 ຕື້ກີບ;
- ແຂວງໄຊສົມບູນ 100 ຕື້ກີບ;

ຂ. ບ້ວງລົງທຶນປົກກະຕິຈຳນວນ1.600ຕື້ກີບ ເທົ່າກັບ 36,70% ຂອງການລົງທຶນຈາກງົບປະມານພາຍໃນ ໃນນັ້ນ:

- ໂຄງການຊຳລະໜີ້ສິນ 400 ຕື້ກີບ;
- ໂຄງການສືບຕໍ່ 1.100 ຕື້ກີບ.
- ໂຄງການສົມທົບທຶນຊ່ວຍເຫຼືອທາງການເພື່ອການພັດທະນາ ແລະ ໂຄງການໃໝ່ທີ່ຈຳເປັນຈຳນວນໜຶ່ງ 100 ຕື້ກີບ;

(2) ການລົງທຶນຂອງລັດບ້ວງອື່ນໆລວມທັງຈິດຮັບຈິດຈ່າຍ 1.909,82 ຕື້ກີບ ກວມເອົາ 43,80% ຂອງການລົງທຶນ (ກວມເອົາ 4,30% ຂອງທຶນລວມທັງໝົດ) ຈັດສັນດັ່ງນີ້:

- ສົມທົບທຶນໂຄງການທາງລົດໄຟລາວ-ຈີນ 478,95 ຕື້ກີບ;
- ກອງທຶນທາງ 700 ຕື້ກີບ;
- ໂຄງການຈິດຮັບ-ຈິດຈ່າຍອື່ນໆ 730,86 ຕື້ກີບ.

2) ການລົງທຶນຂອງລັດຈາກທຶນຊ່ວຍເຫຼືອທາງການເພື່ອພັດທະນາ (ODA) 7.113,35 ຕື້ກີບ ກວມເອົາ 16,04% ຂອງທຶນລວມທັງໝົດ (ເທົ່າກັບ 4,29% ຂອງ GDP).

3) ການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ 23.086,13 ຕື້ກີບ ກວມເອົາ 52,06% ຂອງທຶນລວມທັງໝົດ (ເທົ່າກັບ 13,95% ຂອງ GDP).

4) ການລົງທຶນຈາກລະບົບການເງິນ, ເງິນຕາ 9.788 ຕື້ກີບ ກວມເອົາ 22,07% ຂອງທຶນລວມທັງໝົດ (ເທົ່າກັບ 5,91% ຂອງ GDP).

**2.2. ການລົງທຶນຈາກງົບປະມານຂອງລັດ (ປະມານ 2.450 ຕື້ກີບ)**

**2.2.1. ການລົງທຶນບ້ອງສະເພາະ**

1. **ທຶນຟື້ນຟູໄພພິບັດ ຈຳນວນ 500 ຕື້ກີບ ໃຫ້ປະຕິບັດ ດັ່ງນີ້:**

(1) ໂຄງການຟື້ນຟູໄພພິບັດແມ່ນໂຄງການສ້ອມແປງຟື້ນຟູບັນດາພື້ນຖານໂຄງລ່າງ ເພື່ອຮັບໃຊ້ການຜະລິດ, ການບໍລິການພາກລັດ ແລະ ສິ່ງອຳນວຍຄວາມສະດວກຕ່າງໆທີ່ໄດ້ຮັບຜົນເສຍຫາຍຈາກໄພພິບັດໃນປີ 2018 ໃຫ້ຄືນສູ່ສະພາບປົກກະຕິ.

(2) ເພື່ອຮັບປະກັນໃນການສ້າງແຜນໂຄງການຟື້ນຟູຫຼັງໄພພິບັດໃຫ້ທັນກຳນົດເວລາ ແລະ ນຳສະເໜີສະພາແຫ່ງຊາດຮັບຮອງ ໃນເງື່ອນໄຂງົບປະມານຈຳກັດ ໃຫ້ແຕ່ລະພາກສ່ວນຄົ້ນຄວ້າສັງລວມ ແລະ ຈັດລຽງບູລິມະສິດໂຄງການທີ່ຈຳເປັນແທ້ໆ ແລະ ໃຫ້ປະຕິບັດຕາມເງື່ອນໄຂຂອງໂຄງການສະເໜີໃໝ່ ທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບເລກທີ 72/ສພຊ ໂດຍສະເພາະ ມາດຕາ 22 ເອກະສານໂຄງການລົງທຶນຂອງລັດ ແລະ ມາດຕາ 34 ການປະເມີນ ແລະ ອົງການປະເມີນໂຄງການລົງທຶນຂອງລັດ.

(3) ການຢັ້ງຢືນບັນດາໂຄງການທີ່ເປັນໂຄງການຟື້ນຟູ ໂດຍສະເພາະໂຄງການພື້ນຖານໂຄງລ່າງຕ້ອງເປັນໂຄງການທີ່ໄດ້ຮັບຜົນກະທົບຈາກໄພທຳມະຊາດທີ່ເກີດຂຶ້ນໃນປີ 2018 ນີ້ເທົ່ານັ້ນ ໂດຍມີການແຕ່ງຕັ້ງຄະນະທີ່ກ່ຽວຂ້ອງຢັ້ງຢືນແຕ່ຫົວທີ ເປັນຕົ້ນ: ເຈົ້າຂອງໂຄງການ, ຂະແໜງກວດກາ, ຂະແໜງການຄຸ້ມຄອງດ້ານເຕັກນິກ, ຂະແໜງແຜນການ ແລະ ປະເມີນຜົນ ແລະ ອື່ນໆທີ່ກ່ຽວຂ້ອງ.

(4) ບັນດາໂຄງການທີ່ນຳສະເໜີ ເພື່ອຟື້ນຟູຕ້ອງເປັນໂຄງການທີ່ໄດ້ນຳໃຊ້ ແລະ ກໍ່ສ້າງສຳເລັດຜ່ານມາແລ້ວ, ມີການຢັ້ງຢືນຈາກຄະນະກຳມະການຈາກພາກສ່ວນກ່ຽວຂ້ອງ, ສຳເລັດການມອບຮັບແລ້ວ ແລະ ໄດ້ນຳໃຊ້ແລ້ວ ແຕ່ໄດ້ຮັບຜົນກະທົບຈາກໄພທຳມະຊາດທີ່ເກີດຂຶ້ນໃນປີ 2018, ສ່ວນໂຄງການທີ່ກຳລັງດຳເນີນການກໍ່ສ້າງ ແລະ ໄດ້ມີການກວດກາໜ້າວຽກສຳເລັດໄປແລ້ວຈຳນວນໜຶ່ງ ແຕ່ໜ້າວຽກສຳເລັດໄປນັ້ນໄດ້ຮັບຜົນກະທົບຈາກໄພທຳມະຊາດທີ່ເກີດຂຶ້ນໃນປີ 2018 (ໂຄງການສືບຕໍ່ກໍ່ສ້າງທີ່ວຽກບໍ່ທັນສຳເລັດ ແລະ ຍັງບໍ່ທັນໄດ້ມອບຮັບໂຄງການ) ແມ່ນບໍ່ໃຫ້ສັງລວມເຂົ້າໃນແຜນສະເໜີໂຄງການຟື້ນຟູນີ້ ແຕ່ໃຫ້ສະເໜີດັດແກ້ມູນຄ່າໂຄງການໂດຍປະຕິບັດຕາມມາດຕາ 54 (ການດັດແກ້ມູນຄ່າໂຄງການລົງທຶນຂອງລັດ) ຂອງກົດໝາຍການລົງທຶນຂອງລັດ ເລກທີ 72/ສພຊ.

(5) ໃຫ້ຫ້ອງການ ຫຼື ກົມກອງທີ່ຮັບຜິດຊອບວຽກງານແຜນການຂອງບັນດາກະຊວງ ແລະ ອົງການລັດທຽບເທົ່າກະຊວງ ແລະ ພະແນກແຜນການ ແລະ ການລົງທຶນ ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ເປັນເຈົ້າການໃນການປະສານສົມທົບກັບກົມກອງ ແລະ ພະແນກການຕ່າງໆ ອ້ອມຂ້າງ ເພື່ອຄົ້ນຄວ້າ, ສັງລວມ ແລະ ຈັດລຽງບູລິມະສິດ ພ້ອມທັງຄົ້ນຄວ້າຈັດສັນທຶນໃສ່ບັນດາໂຄງການດັ່ງກ່າວ ໃຫ້ໄດ້ຕາມມາດຕາ 19 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ ແລ້ວນຳສະເໜີຄະນະນຳຂອງຕົນພິຈາລະນາຮັບຮອງ ແລະ ຢັ້ງຢືນເປັນທາງການແລ້ວນຳສົ່ງເຖິງ ກະຊວງແຜນການ ແລະ ການລົງທຶນ (ພ້ອມທັງຄັດຕິດໃບຢັ້ງຢືນຜົນການປະເມີນຂອງໂຄງການຟື້ນຟູມາພ້ອມ) ເພື່ອຄົ້ນຄວ້ານຳສະເໜີລັດຖະບານພິຈາລະນາ ແລະ ນຳສະເໜີສະພາແຫ່ງຊາດຮັບຮອງ.

(6) ສຳລັບໂຄງການຟື້ນຟູໄພພິບັດ ທີ່ໄດ້ກວດກາຄວາມຖືກຕ້ອງຊັດເຈນ ແລະ ຢັ້ງຢືນວ່າເປັນໂຄງການຟື້ນຟູໄພພິບັດໃນປີ 2018 ແລະ ເປັນໂຄງການທີ່ມີມູນຄ່າເສຍຫາຍໜ້ອຍກວ່າ ຫຼື ເທົ່າກັບ 50 ລ້ານກີບ ໃຫ້ແກ້ໄຂຂາດຕົວ.

2. **ທຶນຊຳລະຄ່າຊົດເຊີຍໂຄງການທາງລົດໄຟລາວ-ຈີນ** ຈຳນວນ 250 ຕື້ກີບ ໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງສັງລວມ, ຄົ້ນຄວ້າຈັດລຽງບູລິມະສິດ ແລະ ຈັດສັນທຶນໃສ່ໂຄງການ ຫຼື ກິດຈະກຳຊົດເຊີຍ ແຕ່ຕ້ອງປະຕິບັດຕາມມາດຕາ 22 ແລະ ມາດຕາ 34 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບເລກທີ 72/ສພຊ.

**2.2.2. ການປະຕິບັດໂຄງການລົງທຶນພາຍໃນ (ຈຳນວນ 1.600 ຕື້ກີບ)**

1. **ທຶນສຳລັບໂຄງການໜີ້ສິນ:** ໃນປີ 2019 ໄດ້ຈັດສັນທຶນເພື່ອຊຳລະໜີ້ ຈຳນວນ 400 ຕື້ກີບ ໃຫ້ຂະແໜງການ ແລະ ທ້ອງຖິ່ນປະຕິບັດດັ່ງນີ້:

(1) ໃຫ້ກວດກາຄືນໂຄງການທີ່ເປັນໜີ້ ກ່ຽວກັບຄວາມຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ. ໂຄງການໜີ້ສິນຕ້ອງແມ່ນໂຄງການສຳເລັດ 100%, ຕ້ອງປະກອບມີເອກະສານຕົ້ນຕໍເປັນຕົ້ນ: ບົດລາຍງານຄວາມຄືບໜ້າຂອງໜ້າວຽກ ແລະ ໃບຢັ້ງຢືນການກວດກາຜົນສຳເລັດຂອງໂຄງການຈາກຄະນະກຳມະການກວດວຽກຄັ້ງສຸດທ້າຍ ແລະ ການມອບຮັບໂຄງການ. ຈາກນັ້ນ ຈຶ່ງດຳເນີນການຢ່າງເຂັ້ມງວດໃນການຊຳລະໃຫ້ແກ່ໂຄງການທີ່ຄົບເງື່ອນໄຂຕາມທີ່ໄດ້ກຳນົດໄວ້ຢ່າງຄົບຖ້ວນ, ຊຶ່ງຂະແໜງການ ແລະ ທ້ອງຖິ່ນ ຕ້ອງຈັດສັນທຶນເພື່ອຊຳລະຕາມເພດານທີ່ຕົນໄດ້ຮັບໃນບ້ວງຊຳລະໜີ້ສິນ ໃນແຜນການລົງທຶນທີ່ຜ່ານສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງຮັບຮອງເທົ່ານັ້ນ ເພື່ອເຮັດໃຫ້ຈຳນວນໜີ້ສິນຫຼຸດລົງໃນແຕ່ລະປີ. ສະນັ້ນ ຈຶ່ງຫ້າມບໍ່ໃຫ້ອວ່າຍທຶນດັ່ງກ່າວນີ້ໄປໃສ່ໂຄງການປະເພດອື່ນ, ຖ້າຫາກວ່າມີບາງໂຄງການທີ່ມີເງື່ອນໄຂບໍ່ຄົບ ຕ້ອງໄດ້ສະເໜີຫາພາກສ່ວນທີ່ກ່ຽວຂ້ອງຕາມສິດ ແລະ ພາລະບົດບາດທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບເລກທີ 72/ສພຊ ເພື່ອຄົ້ນຄວ້າອວ່າຍທຶນໄປໃສ່ໜີ້ໂຄງການອື່ນທີ່ມີເງື່ອນໄຂຄົບຖ້ວນໃນໄລຍະທ້າຍງວດ 2 ຂອງປີງົບປະມານ. ໃນການເບີກຈ່າຍຕົວຈິງຂະແໜງການເງິນຕ້ອງໄດ້ກວດກາເອກະສານຂໍຖອນຢ່າງລະອຽດຕາມກົດໝາຍ ແລະ ລະບຽບການທີ່ກຳນົດໄວ້ ເພື່ອຮັບປະກັນຄວາມຖືກຕ້ອງ.

(2) ສຳລັບໂຄງການໜີ້ສິນທີ່ໄດ້ຮັບອວ່າຍໜີ້ 3 ແຈ ປີ 2017, ແຕ່ບໍ່ໄດ້ຮັບການຈັດສັນທຶນປົກກະຕິໃຫ້ ໃນປີ 2018 ໃຫ້ກວດກາໜີ້ທີ່ຍັງຄ້າງຕົວຈິງແລ້ວ ໃຫ້ສືບຕໍ່ຈັດສັນແກ້ໄຂໃນປີ 2019 ຢ່າງເໝາະສົມ.

2. **ທຶນສຳລັບໂຄງການສືບຕໍ່:** ໃນປີ 2019 ນີ້ ໄດ້ຈັດສັນທຶນສຳລັບໂຄງການສືບຕໍ່ຈຳນວນ 1.100 ຕື້ກີບ ເພື່ອໃຫ້ຂະແໜງການ ແລະ ທ້ອງຖິ່ນ ປະຕິບັດດັ່ງນີ້:

(1) ປະຕິບັດຕາມການຊີ້ນຳຂອງກອງປະຊຸມລັດຖະບານປະຈຳເດືອນຕຸລາ 2018, ໃຫ້ຄົ້ນຄວ້າສຸມໃສ່ໂຄງການທີ່ຈັດຕັ້ງປະຕິບັດໄປໄດ້ຫຼາຍ ຫຼື ໃກ້ຈະສຳເລັດແລ້ວ ເພື່ອສາມາດນຳໃຊ້ໄດ້ໄວ.

(2) ໃຫ້ກວດກາເບິ່ງຖ້າເຫັນວ່າໂຄງການໃດບໍ່ມີຄວາມຈຳເປັນ, ບໍ່ໄປບໍ່ມາ, ບໍ່ມີຄວາມຄືບໜ້າ, ບໍ່ມີປະສິດທິຜົນແລະຕ້ອງການໂຈະ ຫຼື ເລື່ອນການຊຳລະໄປກ່ອນ ໃຫ້ແຈ້ງເປັນລາຍລັກອັກສອນເຖິງກະຊວງແຜນການ ແລະ ການລົງທຶນ ເພື່ອນຳສະເໜີຂັ້ນເທິງພິຈາລະນາໃນຂັ້ນຕໍ່ໄປ.

(3) ສຳລັບໂຄງການສົ່ງເສີມວິຊາການໃຫ້ສຸມໃສ່ໂຄງການສືບຕໍ່; ຖ້າມີຄວາມຈຳເປັນ ແລະ ມີທຶນເຫຼືອກໍ່ໃຫ້ຈັດສັນໃສ່ໂຄງການໃໝ່ທີ່ຈຳເປັນຮີບດ່ວນ ໂດຍສະເພາະແມ່ນໂຄງການຊຸກຍູ້ສົ່ງເສີມການຜະລິດ.

(4) ໃນໄລຍະດຳເນີນການຈັດຕັ້ງປະຕິບັດໂຄງການຕ້ອງມີການຕິດຕາມກວດກາລະອຽດ ແລະ ປະເມີນຕີລາຄາໃນແຕ່ລະໄລຍະ, ຫ້າມບໍ່ໃຫ້ມີການຕັດຫຼຸດ ຫຼື ເພີ່ມບໍລິມາດໜ້າວຽກຂອງໂຄງການໂດຍບໍ່ມີການເຫັນດີຈາກຄະນະກຳມະການຊຶ່ງປະກອບດ້ວຍພາກສ່ວນກ່ຽວຂ້ອງເຊັ່ນ: ເຈົ້າຂອງໂຄງການ (ປະກອບດ້ວຍກົມກອງພະແນກພາຍໃນ), ຂະແໜງແຜນການ, ຂະແໜງການເງິນ, ຂະແໜງການເຕັກນິກທີ່ກ່ຽວຂ້ອງ ແລະ ຂະແໜງອື່ນໆ ຕາມຄວາມຈຳເປັນຂອງແຕ່ລະໂຄງການແຕ່ຖ້າເຫັນວ່າມີຄວາມຈຳເປັນໃນການຕັດຫຼຸດ ຫຼື ເພີ່ມບໍລິມາດໜ້າວຽກຕ້ອງໄດ້ຮັບການເຫັນດີຈາກຄະນະດັ່ງກ່າວ ຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ.

(5) ບັນດາໂຄງການທີ່ຈະສຳເລັດໃນປີ 2019 ແມ່ນໃຫ້ສົ່ງບັນຊີໂຄງການ ໃຫ້ກະຊວງແຜນການ ແລະ ການລົງທຶນ (ກົມປະເມີນຜົນ) ເພື່ອດຳເນີນການປະເມີນໂຄງການສຳເລັດ 100% ແລ້ວຈຶ່ງປະຕິບັດຕາມຂັ້ນຕອນການມອບຮັບໂຄງການສຳເລັດ 100% ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ແລະ ເພື່ອເຮັດໃຫ້ໂຄງການໄດ້ຖືກນຳໃຊ້ຢ່າງມີປະສິດທິຜົນສູງສຸດ ເຈົ້າຂອງໂຄງການຕ້ອງມີແຜນການນຳໃຊ້ລະອຽດແຕ່ຫົວທີ່ຕາມເປົ້າໝາຍ ແລະ ຈຸດປະສົງຂອງໂຄງການທີ່ວາງໄວ້.

3. **ທຶນສຳລັບໂຄງການສົມທົບທຶນຊ່ວຍເຫຼືອທາງການເພື່ອການພັດທະນາ (ODA)**

(1) ໃຫ້ຈັດສັນຕາມທຶນສົມທົບ ທີ່ລັດຖະບານໄດ້ລົງນາມໃນສັນຍາຢ່າງເຄັ່ງຄັດ ໂດຍຜ່ານການກວດກາຄວາມຖືກຕ້ອງຈາກກົມຮ່ວມມືສາກົນ, ກະຊວງແຜນການ ແລະ ການລົງທຶນກ່ອນ. ໃຫ້ກວດກາໜ້າວຽກ ແລະ ສົມທົບເຈລະຈາ

ກັບຄູ່ຮ່ວມພັດທະນາເພື່ອໃຫ້ປະຕິບັດໂຄງການແທດເໝາະກັບຄວາມອາດສາມາດຂອງທຶນສົມທົບທີ່ມີຕົວຈິງ ແລະ ຖ້າໂຄງການອື່ນໆ ທີ່ຕ້ອງການທຶນສົມທົບຕື່ມກໍ່ໃຫ້ກວດກາ ແລະ ດຳເນີນການຕາມຂັ້ນຕອນຂອງລະບຽບການ.

(2) ທຶນສົມທົບທີ່ຂັ້ນແຂວງໄດ້ຕົກລົງລະຫວ່າງແຂວງແຮກສ່ຽວແມ່ນໃຫ້ຈັດສັນ ໃນງົບປະມານຂອງແຂວງທີ່ໄດ້ຮັບປະຈຳປີນີ້.

(3) ໃຫ້ຂະແໜງການແຜນການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບຄວາມອາດສາມາດໃນການປະຕິບັດພັນທະທີ່ລັດຖະບານ ໄດ້ຕົກລົງກັບອົງການຈັດຕັ້ງສາກົນ ແລະ ປະເທດເພື່ອນມິດ ໂດຍຂຶ້ນແຜນການຊຳລະລະອຽດ ນັບທັງທຶນທີ່ເປັນການສົມທົບທາງດ້ານວັດຖຸ ແລະ ສົມທົບເປັນເງິນສົດ ໂດຍໃຫ້ສອດຄ່ອງກັບດຳລັດສະບັບເລກທີ 75/ສພຊ ຮັບປະກັນຄວາມຖືກຕ້ອງຕາມເປົ້າໝາຍຂອງໂຄງການ ແລະ ໃຫ້ໂຄງການສາມາດດຳເນີນງານຢ່າງມີຜົນສຳເລັດ ແລະ ມີປະສຸດທິຜົນສູງສຸດ.

(4) ຖ້າຫາກພາກສ່ວນຂະແໜງການ ແລະ ທ້ອງຖິ່ນ ມີການປ່ຽນແປງນະໂຍບາຍ ເຮັດໃຫ້ໂຄງການທີ່ໄດ້ຂຶ້ນແຜນໃນເບື້ອງຕົ້ນບໍ່ໄດ້ຮັບການຈັດຕັ້ງປະຕິບັດ ຫຼື ຍ້ອນສາເຫດອື່ນໆ ເຈົ້າຂອງໂຄງການສາມາດອ່າຍທຶນດັ່ງກ່າວໄປໃສ່ໂຄງການອື່ນໄດ້ ຖ້າຫາກເຫັນວ່າມີຄວາມຈຳເປັນນຳໃຊ້ທຶນດັ່ງກ່າວ, ແຕ່ຕ້ອງປະຕິບັດຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບເລກທີ 72/ສພຊ ແລະ ລະບຽບການອື່ນໆທີ່ກ່ຽວຂ້ອງຢ່າງເຂັ້ມງວດ ແຕ່ຕ້ອງສະເໜີໃນໄລຍະ 6 ເດືອນທ້າຍປີ.

(5) ເພື່ອເຮັດໃຫ້ການຄຸ້ມຄອງທຶນຊ່ວຍເຫຼືອທາງການ ເພື່ອການພັດທະນາສາມາດຄຸ້ມຄອງ ແລະ ໄປຕາມທິດທີ່ລັດຖະບານກຳນົດໄວ້ ຖ້າຫາກມີການເພີ່ມ ຫຼື ປ່ຽນແປງທຶນສົມທົບທີ່ໄດ້ຜ່ານການເຫັນດີ ແລະ ອະນຸມັດຜ່ານມາແລ້ວ ແມ່ນຕ້ອງໄດ້ປະຕິບັດຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນດຳລັດ ສະບັບເລກທີ 75/ນຍ ແລະ ມີການຢັ້ງຢືນແລະ ກວດກາຄືນຈາກກົມຮ່ວມມືສາກົນ, ກົມແຜນການ ແລະ ກົມປະເມີນຜົນ, ກະຊວງແຜນການ ແລະ ການລົງທຶນ ເພື່ອສະເໜີລັດຖະບານ ນຳລະເໜີສະພາແຫ່ງຊາດພິຈາລະນາດັດແກ້.

**4. ທຶນສຳລັບໂຄງການສະເໜີໃໝ່:** ສຳລັບໂຄງການໃໝ່ໃຫ້ຂະແໜງການ ແລະ ທ້ອງຖິ່ນປະຕິບັດ ດັ່ງນີ້:

(1) ເພື່ອຮັບປະກັນການນຳໃຊ້ງົບປະມານຂອງລັດໃຫ້ມີປະສິດທິພາບປະສິດທິຜົນສູງສຸດຕ້ອງ ປະຕິບັດຢ່າງເຄັ່ງຄັດຕາມກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ມີຄວາມໂປ່ງໃສ, ສາມາດກວດສອບໄດ້, ເດັດຂາດບໍ່ໃຫ້ຄັດເລືອກເອົາບໍລິສັດມາຈັດຕັ້ງປະຕິບັດໂຄງການແບບຮູບການ. ຕ້ອງຮັບປະກັນໃຫ້ໄດ້ບໍລິສັດທີ່ມີຄວາມສາມາດດ້ານເຕັກນິກວິຊາການ, ມີທຶນຮອນພຽງພໍຢ່າງໜ້ອຍຕ້ອງມີທຶນຂອງຕົນເອງ 30% ຂອງມູນຄ່າໂຄງການ.

(2) ຂັ້ນຕອນການເຈລະຈາຮ່າງສັນຍາຮັບເໝົາຈັດຊື້-ຈັດຈ້າງໂຄງການລົງທຶນຂອງລັດ ຕ້ອງໃຫ້ຂະແໜງແຜນການ ແລະ ການລົງທຶນ, ຂະແໜງການເງິນເຂົ້າຮ່ວມ, ຂະແໜງກວດກາ, ຂະແໜງກວດສອບ ແລະ ຂະແໜງເຕັກນິກເຂົ້າຮ່ວມແຕ່ຫົວທີ ເພື່ອຮັບປະກັນຄວາມຖືກຕ້ອງ, ສອດຄ່ອງກັບລະບຽບກົດໝາຍ, ໂປ່ງໃສ ແລະ ກວດສອບໄດ້ພ້ອມດຽວກັນນັ້ນ, ທຸກໆສັນຍາຈັດຊື້-ຈັດຈ້າງ ແລະ ເອກະສານເບີກຈ່າຍໂຄງການຕ້ອງໄດ້ຮັບການຢັ້ງຢືນຈາກຂະແໜງການແຜນການ ແລະ ການລົງທຶນ ຈຶ່ງສາມາດນຳໃຊ້ຢັ້ງຢືນເປັນທາງການໄດ້.

(3) ເພື່ອຫຼີກລ້ຽງການສ້າງໜີ້ບໍ່ມຊ້ອນໃຫ້ລັດຖະບານໃນອານາຄົດຫ້າມມີການລົງທຶນເຂົ້າໃນການຈັດຕັ້ງປະຕິບັດໂຄງການກ່ອນໄດ້ຮັບຄວາມເຫັນເຫັນດີຈາກລັດຖະບານ ແລະ ຜ່ານການຮັບຮອງຈາກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຕາມຄຳສັ່ງເລກທີ 16/ນຍ, ລົງວັນທີ 18 ເມສາ 2013 ວ່າດ້ວຍການຢຸດຊົ່ວຄາວການອະນຸມັດໂຄງການຂໍລົງທຶນກ່ອນ ແລະ ໂຄງການນອກແຜນທີ່ນຳໃຊ້ທຶນຈາກງົບປະມານຂອງລັດ ແລະ ມະຕິສະພາແຫ່ງຊາດສະບັບເລກທີ 04/ສພຊ, ລົງວັນທີ 21 ທັນວາ 2011 ວ່າດ້ວຍການຫ້າມພິຈາລະນາໂຄງການນອກແຜນຫຼັງວັນທີ 31 ທັນວາ 2012 ເຂົ້າແຜນ, ຖ້າມີຄວາມຈຳເປັນແທ້ ແມ່ນໃຫ້ຂະແໜງການ ແລະ ທ້ອງຖິ່ນ ຄົ້ນຄວ້ານຳສະເໜີລັດຖະບານພິຈາລະນາຕົກລົງເປັນແຕ່ລະກໍລະນີ ໃນປີຕໍ່ໄປ.

#### 2.2.3. ບາງມາດຕະການໃນການຄຸ້ມຄອງການລົງທຶນຂອງລັດ

1. **ຂັ້ນຕອນການຊໍາລະສະສາງການລົງທຶນຈາກງົບປະມານພາຍໃນ**

(1) ການກວດກາຜົນສໍາເລັດໜ້າວຽກໂຄງການແຕ່ລະຄັ້ງ ຕ້ອງມີເອກະສານຢັ້ງຢືນທີ່ຄົບຖ້ວນຈາກຄະນະກໍາມະການກວດກາວຽກ ຊຶ່ງປະກອບດ້ວຍຄະນະກໍາມະການຈາກພາກສ່ວນຕ່າງໆ ໂດຍເຄັ່ງຄັດປະຕິບັດຕາມກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງສະບັບເລກທີ 30/ສພຊ ລົງວັນທີ 2 ພະຈິກ 2017 ຊຶ່ງທຸກໆການຊໍາລະສະສາງການລົງທຶນຂອງລັດຕ້ອງອີງໃສ່ການກວດກາຜົນສໍາເລັດການຈັດຕັ້ງປະຕິບັດໜ້າວຽກໂຄງການ ຫຼື ກິດຈະກໍາຕົວຈິງ ໂດຍອີງໃສ່ສັນຍາໂຄງການ ຫຼື ກິດຈະກໍາໂຄງການອາດຈະດໍາເນີນໃນຄັ້ງດຽວ ຫຼື ຫຼາຍຄັ້ງ.

(2) ສໍາລັບໂຄງການທີ່ສໍາເລັດ 100% ກ່ອນຈະມີການມອບຮັບເປັນທາງການນັ້ນ, ໃຫ້ມີການປະເມີນໂຄງການສໍາເລັດ 100% ເພື່ອແນະນໍາການນໍາໃຊ້ ຫຼື ມີການທົດລອງການນໍາໃຊ້ເສຍກ່ອນ, ຕາມມາດຕາ 71 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ ແລະ ລະບຽບການທີ່ກ່ຽວຂ້ອງ.

(3) ພາຍຫຼັງທີ່ມີການຢັ້ງຢືນຈາກຄະນະກໍາມະການກວດວຽກຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການແລ້ວເຈົ້າຂອງໂຄງການຕ້ອງປະກອບເອກະສານຄົບຊຸດ ເພື່ອຊໍາລະໃຫ້ແກ່ຜູ້ຮັບເໝົາໂຄງການຕາມຂັ້ນຕອນ ດັ່ງນີ້:

1. ປະກອບເອກະສານຄົບຊຸດ ຊຶ່ງປະກອບມີ ຂໍ້ຕົກລົງແຕ່ງຕັ້ງຄະນະຮັບຜິດຊອບໂຄງການ, ໃບຢັ້ງຢືນຂໍການປະເມີນໂຄງການ, ສໍາເນົາແບບກໍ່ສ້າງ, ໃບປະເມີນລາຄາ, ໃບສັ່ງວຽກ, ສັນຍາປະຕິບັດໂຄງການ, ໃບຢັ້ງຢືນຜົນສໍາເລັດຂອງໂຄງການຂອງຄະນະກໍາມະການກວດກາ, ໃບຂໍຖອນຂອງໂຄງການ, ບົດບັນທຶກການປະຊຸມ ຫຼື ເອກະສານອື່ນທີ່ຈໍາເປັນ ແລ້ວສະເໜີຕໍ່ຂະແໜງແຜນການ ແລະ ການລົງທຶນແຂວງ, ນະຄອນຫຼວງວຽງຈັນ, ກໍລະນີໂຄງການທີ່ກະຊວງ-ອົງການທຽບເທົ່າກະຊວງຄຸ້ມຄອງ ໃຫ້ສະເໜີເຖິງກະຊວງແຜນການ ແລະ ການລົງທຶນ (ກົມແຜນການ) ເພື່ອກວດກາຄືນທາງດ້ານການຈັດຕັ້ງປະຕິບັດໜ້າວຽກ, ການຊໍາລະໃນໄລຍະຜ່ານມາ ແລະ ຄວາມສອດຄ່ອງທາງດ້ານຫຼັກການຂອງກິດຈະກໍາໂຄງການກັບເປົ້າໝາຍ ແລະ ໝາກຜົນຂອງໂຄງການທີ່ຕັ້ງໄວ້, ຈາກນັ້ນຈຶ່ງນໍາສົ່ງເອກະສານຂໍຖອນໃຫ້ກະຊວງການເງິນ ຫຼື ພະແນກການເງິນປະຈໍາແຂວງ.
2. ພາຍຫຼັງທີ່ກະຊວງແຜນການ ແລະ ການລົງທຶນ ຫຼື ພະແນກແຜນການ ແລະ ການລົງທຶນແຂວງ, ນະຄອນຫຼວງວຽງຈັນຮັບຮອງ ແລະ ຢັ້ງຢືນເອກະສານດັ່ງກ່າວ, ເຈົ້າຂອງໂຄງການຈຶ່ງສະເໜີຕໍ່ຂະແໜງ ການເງິນ, ຖ້າແມ່ນໂຄງການຂັ້ນສູນກາງຄຸ້ມຄອງໃຫ້ສະເໜີຕໍ່ກະຊວງການເງິນ (ກົມງົບປະມານ), ຖ້າແມ່ນໂຄງການທີ່ແຂວງຄຸ້ມຄອງໃຫ້ສະເໜີຕໍ່ພະແນກການເງິນແຂວງ, ນະຄອນຫຼວງວຽງຈັນ ເພື່ອຄົ້ນຄວ້າອະນຸມັດເບີກຈ່າຍຕາມກົດໝາຍ ແລະ ລະບຽບການ.
3. ໃຫ້ປະຕິບັດຕາມມາດຕາທີ 21 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບເລກທີ 72/ສພຊ ສໍາລັບການຄຸ້ມຄອງໂຄງການ ແລະ ການບໍລິຫານໂຄງການນັ້ນແມ່ນໃຫ້ແຍກເປັນໂຄງການສະເພາະບໍ່ໃຫ້ລວມໃສ່ມູນຄ່າການກໍ່ສ້າງໂຄງການ, ທຸກການໃຊ້ຈ່າຍຕ້ອງໄດ້ປະຕິບັດຕາມຂັ້ນຕອນທີ່ລະບຸໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຢ່າງເຄັ່ງຄັດ ໂດຍແມ່ນເຈົ້າຂອງໂຄງການ ຫຼື ຄະນະຮັບຜິດຊອບໂຄງການມີສິດນໍາໃຊ້ບ້ວງດັ່ງກ່າວໂດຍບໍ່ຜ່ານບັນຊີຂອງຜູ້ຮັບເໝົາ.

2. **ສໍາລັບໂຄງການນອກແຜນ ແລະ ໂຄງການລົງທຶນກ່ອນ:** ເຄັ່ງຄັດປະຕິບັດຕາມຄໍາສັ່ງເລກທີ 16/ນຍ, ລົງວັນທີ 18 ເມສາ 2013 ວ່າດ້ວຍການຢຸດຊົ່ວຄາວການອະນຸມັດໂຄງການຂໍລົງທຶນກ່ອນ ແລະ ໂຄງການນອນແຜນທີ່ນໍາໃຊ້ທຶນຈາກງົບປະມານຂອງລັດ ແລະ ມະຕິສະພາແຫ່ງຊາດສະບັບເລກທີ 04/ສພຊ, ລົງວັນທີ 21 ທັນວາ 2011 ວ່າດ້ວຍການຫ້າມພິຈາລະນາໂຄງການນອກແຜນ ຫຼັງວັນທີ 31 ທັນວາ 2012 ເຂົ້າແຜນ. ຫາກພາກສ່ວນໃດຈັດຕັ້ງປະຕິບັດເປັນຢ່າງອື່ນຈາກຄໍາສັ່ງ ແລະ ມະຕິດັ່ງກ່າວ ແມ່ນໃຫ້ພາກສ່ວນນັ້ນຮັບຜິດຊອບ ເວັ້ນເສຍແຕ່ສາມາດແກ້ໄຂຕາມຜົນຂອງການກວດສອບ, ກວດກາ ແລະ ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງເສຍກ່ອນ ຈຶ່ງສາມາດນໍາສະເໜີເພື່ອພິຈາລະນາເຂົ້າແຜນໄດ້ແຕ່ຕ້ອງໄດ້ປະຕິບັດຕາມຂັ້ນຕອນທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບເລກທີ 72/ສພຊ ແລະ ລະບຽບການທີ່ກ່ຽວຂ້ອງຢ່າງເຄັ່ງຄັດ.

3. **ສໍາລັບການດັດແກ້, ການໂຈະ, ການອ່ວຍ ແລະ ການຍົກເລີກໂຄງການລົງທຶນຂອງລັດ:** ຕ້ອງໄດ້ແຕ່ງຕັ້ງຄະນະກໍາມະການ ຫຼື ຄະນະຮັບຜິດຊອບ ການກໍ່ສ້າງໂຄງການທີ່ປະກອບດ້ວຍພາກສ່ວນທີ່ກ່ຽວຂ້ອງຄື: ຂະແໜງແຜນການ ແລະ ການລົງທຶນ, ຂະແໜງການເງິນ, ຂະແໜງເຕັກນິກວິຊາການທີ່ກ່ຽວຂ້ອງ (ຂະແໜງການໂຍທາທິການ-ຂົນສົ່ງ, ຂະແໜງກະສິກໍາ-ປ່າໄມ້ ແລະ ພາກສ່ວນອື່ນຕາມຄວາມເໝາະສົມຂອງໂຄງການ) ເພື່ອດໍາເນີນການກວດກາ ແລະ ປະເມີນ. ຈາກນັ້ນ ໃຫ້ຂະແໜງການ, ທ້ອງຖິ່ນ ທີ່ເປັນເຈົ້າຂອງໂຄງການ ໂດຍອີງໃສ່ການຄົ້ນຄວ້ານໍາສະເໜີເຖິງອົງການທີ່ມີສິດພິຈາລະນະອະນຸມັດ ແລະ ທຸກການດັດແກ້, ການອ່ວຍ, ການໂຈະ ແລະ ການຍົກເລີກ ຕ້ອງໄດ້ປະຕິບັດຕາມຂັ້ນຕອນທີ່ໄດ້ລະບຸໄວ້ໃນກົດໝາຍວ່າດ້ວຍການລົງທຶນຂອງລັດສະບັບເລກທີ 72/ສພຊ ເປັນຕົ້ນ: ມາດຕາ 54, 55, 56 ແລະ 57 ຢ່າງເຂັ້ມງວດ ແລະ ຫ້າມເດັດຂາດບໍ່ໃຫ້ດໍາເນີນການກ່ອນທີ່ອົງການທີ່ມີສິດອະນຸມັດພິຈາລະນາເຫັນດີ, ຖ້າພາກສ່ວນໃດລະເມີດຕ້ອງເປັນຜູ້ຮັບຜິດຊອບຕໍ່ໜ້າກົດໝາຍດ້ວຍຕົວເອງ.
4. **ການຕິດຕາມ-ກວດກາ, ກວດສອບ ແລະ ສະຫຼຸບລາຍງານການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ:**
   (1) ເພື່ອເຮັດໃຫ້ສາມາດຄຸ້ມຄອງການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດໃຫ້ໄປຕາມແຜນທີ່ວາງໄວ້ ແລະ ໄປຕາມທິດ, ບັນລຸໄດ້ຕາມຈຸດປະສົງ ແລະ ລະດັດຄາດໝາຍຂອງໂຄງການ ຊຶ່ງເປັນການຕິດຕາມຄວາມຄືບໜ້າວຽກໂຄງການ ຖ້າໂຄງການໃດບໍ່ມີປະສິດທິພາບ, ປະສິດທິຜົນ ແລະ ມີລັກສະນະແກ່ຍາວຖ່ວງດຶງເວລາ ກໍ່ໃຫ້ພາກສ່ວນກ່ຽວຂ້ອງພິຈາລະນາໂຈະ ຫຼື ຍົກເລີກໂຄງການໄປກ່ອນ ເພື່ອຮັກສາໄດ້ການນໍາໃຊ້ງົບປະມານຂອງລັດທີ່ມີຈໍາກັດໃຫ້ເກີດປະສິດທິພາບ, ປະສິດທິຜົນສູງສຸດ. ສະນັ້ນ, ເຈົ້າຂອງໂຄງການ ແລະ ພາກສ່ວນທີ່ກ່ຽວຂ້ອງຕ້ອງໄດ້ມີການຕິດຕາມ, ປະເມີນຜົນ ແລະ ສະຫຼຸບລາຍງານການຈັດຕັ້ງປະຕິບັດໂຄງການເປັນແຕ່ລະໄລຍະ ເປັນຕົ້ນ: ໄລຍະເລີ່ມຕົ້ນການຈັດຕັ້ງປະຕິບັດໂຄງການ, ໄລຍະການຈັດຕັ້ງປະຕິບັດໂຄງການ, ກ່ອນມອບຮັບໂຄງການທີ່ຈະສໍາເລັດ 100% ແລະ ພາຍຫຼັງໂຄງການສໍາເລັດ ແລະ ການກວດກາໜ້າວຽກແຕ່ລະຄັ້ງຕ້ອງໄດ້ມີການສະຫຼຸບລາຍງານເປັນປົກກະຕິທຸກໆ 3 ເດືອນ 6 ເດືອນ, 9 ເດືອນ ແລະ ໝົດປີ ແລ້ວນໍາສົ່ງບົດລາຍງານເຖິງກົມປະເມີນຜົນ, ກົມແຜນການ ໂດຍຜ່ານລະບົບເອກະສານຂາເຂົ້າ-ຂາອອກຂອງຫ້ອງການ, ກະຊວງແຜນການ ແລະ ການລົງທຶນ.
   (2) ເພື່ອເຮັດໃຫ້ປະຕິບັດໄດ້ຕາມທິດ ຫັນເຂົ້າສູ່ການປະຕິບັດວິໄນແຜນການ-ການເງິນ ໂດຍການຫັນເຂົ້າສູ່ການຄຸ້ມຄອງລັດດ້ວຍກົດໝາຍຢ່າງເຄັ່ງຄັດ ເພື່ອເຮັດໃຫ້ປະຢັດໄດ້ການໃຊ້ຈ່າຍງົບປະມານຂອງລັດໃຫ້ໄປຕາມເປົ້າໝາຍ ແລະ ໄປຕາມທິດປະຢັດນັ້ນ ທຸກຂະແໜງການ ແລະ ທ້ອງຖິ່ນ ຕ້ອງເອົາໃຈໃສ່ເພີ່ມທະວີ ແລະ ຍົກສູງວຽກງານກວດສອບ-ກວດກາ ໂດຍອີງໃສ່ດໍາລັດ ສະບັບເລກທີ 01/ລບ, ລົງວັນທີ 6 ມັງກອນ 2015 ວ່າດ້ວຍການຕິດຕາມກວດກາໂຄງການລົງທຶນຂອງລັດເລີ່ມແຕ່ຫົວທີ ແລະ ທຸກໂຄງການລົງທຶນຂອງລັດຕ້ອງໄດ້ປະຕິບັດຕາມຂັ້ນຕອນທີ່ໄດ້ລະບຸໄວ້ໃນກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບເລກທີ 72/ສພຊ, ລົງວັນທີ 15 ທັນວາ 2015 ຢ່າງເຂັ້ມງວດ ເພື່ອຫຼີກລ້ຽງການປະຕິບັດໂຄງການນອກແຜນ, ການຊໍາລະຊໍ້າຊ້ອນ, ການຊໍາລະເກີນແຜນ, ໂຄງການທີ່ບໍ່ຜ່ານການປະເມີນເຂົ້າແຜນ ແລະ ນໍາໄປສູ່ປະສິດທິພາບປະສິດທິຜົນຂອງໂຄງການຕໍ່າ ເຮັດໃຫ້ພາກລັດສູນເສຍງົບປະມານມະຫາສານ. ນອກຈາກນີ້ ໃຫ້ຂະແໜງການ ແລະ ທ້ອງຖິ່ນເອົາໃຈໃສ່ແກ້ໄຂຕາມຜົນຂອງມະຕິຂອງສະພາແຫ່ງຊາດ ສະບັບເລກທີ 04/ສພຊ, ລົງວັນທີ 21 ທັນວາ 2011, ມະຕິ 026/ສພຊ, ລົງວັນທີ 25 ທັນວາ 2015, ມະຕິເລກທີ 12/ສພຊ, ລົງວັນທີ 31 ທັນວາ2016 ມະຕິຕ່າງໆຂອງສະພາແຫ່ງຊາດ.
   (3) ເພື່ອເປັນການປະຕິບັດຕາມຜົນການກວດສອບ, ກວດກາ ກະຊວງແຜນການ ແລະ ການລົງທຶນ ຂໍແນະນໍາໃຫ້ພາກສ່ວນກ່ຽວຂ້ອງ ເອົາໃຈໃສ່ແກ້ໄຂຕາມຄໍາແນະນໍາຂອງມະຕິຂອງກອງປະຊຸມສະພາແຫ່ງຊາດວ່າດ້ວຍການຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານກວດສອບ ປະຈໍາປີ 2017 ແລະ ບົດລາຍງານຂອງອົງການກວດກາລັດຖະບານ ກ່ຽວກັບຜົນການກວດກາຕາມຜົນຂອງການກວດສອບ ສະບັບເລກທີ 101/ສພຊ, ລົງວັນທີ 28 ພະຈິກ 2018 ຢ່າງເຄັ່ງຄັດ ໂດຍໃຫ້ກົມແຜນການ ຫຼື ຫ້ອງການທີ່ຮັບຜິດຊອບວຽກງານແຜນການ ຂອງກະຊວງ-ອົງການທຽບເທົ່າກະຊວງ ແລະ ພະແນກແຜນການ ແລະ ການລົງທຶນ ປະຈໍາແຂວງ ແລະ ນະຄອນຫຼວງວຽງຈັນ ສົມທົບກັບເຈົ້າຂອງໂຄງການຄື:

1. ກວດກາຄືນໂຄງການນອກແຜນ, ໂຄງການບໍ່ໄດ້ປະເມີນຜົນ, ໂຄງການຈ່າຍຊ້ຳຊ້ອນ, ໂຄງການຈ່າຍເກີນບໍລິມາດກໍ່ສ້າງຕົວຈິງ ແລະ ດຳເນີນການແກ້ໄຂມູນຄ່າຜິດດ່ຽງໃນບັນດາໂຄງການທີ່ກວດພົບເຫັນວ່າຕ່ຳກວ່າມູນຄ່າໃນແຜນການທີ່ສະພາແຫ່ງຊາດໄດ້ຮັບຮອງເອົາ ເພື່ອເປັນການປະຢັດງົບປະມານຂອງລັດ ແລະ ຮັບປະກັນການຊຳລະການກໍ່ສ້າງທີ່ສອດຄ່ອງກັບມູນຄ່າຕົວຈິງ; ປະຕິບັດເຂັ້ມງວດຂັ້ນຕອນການລົງທຶນຂອງລັດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 23 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ, ແກ້ໄຂຜົນການກວດສອບຕາມທີ່ໄດ້ກຳນົດໄວ້ໃນມາດຕາ 23, ມາດຕາ 24 ຂອງກົດໝາຍວ່າດ້ວຍການກວດກາລັດ.
2. ສະເໜີໃຫ້ປະສານສົມທົບກັບຂະແໜງການເງິນ, ຂະແໜງແຜນການ ແລະ ການລົງທຶນ ແລະ ອົງການທີ່ກ່ຽວຂ້ອງປັບມູນຄ່າເກີນແຜນຂອງບັນດາໂຄງການກໍ່ສ້າງທີ່ກວດກາເຫັນຢູ່ໃນສາລະບານງົບປະມານໃຫ້ຖືກຕ້ອງ ແລະ ຊີ້ນຳບັນດາຂະແໜງແຜນການຂອງກະຊວງ-ອົງການທຽບເທົ່າກະຊວງ, ນະຄອນຫຼວງວຽງຈັນ ແລະ ແຂວງບໍ່ໃຫ້ນຳເອົາບັນດາໂຄງການທີ່ບໍ່ໄດ້ຜ່ານຜົນການປະເມີນ ຫຼື ໄດ້ປະເມີນຜົນໃນປະເພດແອຟ (F) ຈັດເຂົ້າແຜນການລົງທຶນຂອງລັດ ໃນຊຸມປີຕໍ່ໄປອີກ ເພື່ອແນ່ໃສ່ປະຕິບັດມາດຕາ 33 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ ຢ່າງເຂັ້ມງວດ.
3. ສົມທົບກັບບັນດາອົງການລັດ ເພື່ອກວດກາຄືນສັນຍາ ແລະ ເຈລະຈາຄືນໃໝ່ກ່ຽວກັບຫົວໜ່ວຍລາຄາກໍ່ສ້າງ, ໂຄງປະກອບລາຄາໂຄງການກໍ່ສ້າງ, ຜົນສຳເລັດຂອງໜ້າວຽກທີ່ໄດ້ປະຕິບັດໃນການກໍ່ສ້າງຕົວຈິງໂຄງການທີ່ຖືກໂຈະ ຕາມທີ່ກຳນົດໄວ້ໃນມາດຕາ 34 ແລະ ມາດຕາ 35 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ" ເພື່ອໃຫ້ສາມາດແກ້ໄຂໄດ້ຂໍ້ຄົງຄ້າງ ແລະ ຈຳກັດໄດ້ປະກົດການຫຍໍ້ທໍ້ທາງດ້ານວິໄນແຜນການ-ການເງິນໃຫ້ໄດ້ຢ່າງຂາດໂຕ ຊຶ່ງລາຍລະອຽດ ກະຊວງແຜນການ ແລະ ການລົງທຶນຈະໄດ້ແຈ້ງການເປັນອັນສະເພາະຕື່ມ.

5. **ການປະເມີນໂຄງການກຳລັງຈັດຕັ້ງປະຕິບັດກ່ອນການມອບຮັບ ແລະ ພາຍຫຼັງການນຳໃຊ້**: ອົງການປະເມີນຜົນຈະຕ້ອງໄດ້ດຳເນີນການປະເມີນກ່ອນພິຈາລະນາເຂົ້າແຜນຄື: ປະເມີນໂຄງການສະເໜີໃໝ່, ປະເມີນເວລາຈັດຕັ້ງປະຕິບັດ, ປະເມີນຜົນໂຄງການສຳເລັດ 100% ແລະ ປະເມີນຜົນໂຄງການພາຍຫຼັງນຳໃຊ້ 2 ຫາ 5 ປີ ໃຫ້ມີຄຸນນະພາບ ແລະ ສັງລວມຄືນທັງໝົດບັນດາໂຄງການນອກແຜນແຕ່ວັນທີ 31 ທັນວາ 2016 ຄືນຫຼັງ ໂດຍໃຫ້ປະສານສົມທົບ ແລະ ແນະນຳແຕ່ລະຂະແໜງການ ແລະ ທ້ອງຖິ່ນ ສ້າງເອກະສານໂຄງການຄືນຕາມ 3 ຂັ້ນຕອນຄື: ປະເມີນເວລາຈັດຕັ້ງປະຕິບັດ, ປະເມີນກ່ອນສຳເລັດ 100% ແລະ ປະເມີນພາຍຫຼັງນຳໃຊ້ ໃຫ້ສອດຄ່ອງ ແລະ ເຂົ້າສູ່ລະບຽບກົດໝາຍເທື່ອລະກ້າວ ໂດຍເອົາໃຈໃສ່ປະຕິບັດຕາມຜົນຂອງອົງການກວດສອບແຫ່ງລັດ ແລະ ອົງການກວດກາລັດຖະບານຢ່າງເຄັ່ງຄັດ. ພ້ອມທັງສືບຕໍ່ປະເມີນຄືນໂຄງການລົງທຶນຂອງລັດທີ່ມີການສະເໜີອ່າຍທຶນດັດແກ້ໂຄງການ, ໂຄງການນອກແຜນ ແລະ ໃນແຜນທີ່ຈັດຕັ້ງປະຕິບັດໄປແລ້ວ ແຕ່ບໍ່ທັນໄດ້ປະເມີນ ແລະ ໂຄງການທີ່ມີຜົນການປະເມີນຕ່ຳກວ່າປະເພດ B ເພື່ອແກ້ໄຂຕາມຜົນກວດສອບຂອງອົງການກວດສອບແຫ່ງລັດ ແລະ ອົງການກວດກາລັດຖະບານ.

### 2.3. ການຈັດຕັ້ງປະຕິບັດ ແລະ ຄຸ້ມຄອງທຶນຊ່ວຍເຫຼືອທາງການເພື່ອການພັດທະນາ (ຈຳນວນ 7.113,35 ຕື້ກີບ)

1. ຂະແໜງການ ແລະ ທ້ອງຖິ່ນ ເອົາໃຈໃສ່ປະສານສົມທົບຢ່າງກົມກຽວ ໃນການຊຸກຍູ້ຄູ່ຮ່ວມພັດທະນາ ແລະ ປະເທດເພື່ອນມິດຕາມແນວທາງໃນການລະດົມທຶນຊ່ວຍເຫຼືອທາງການເພື່ອພັດທະນາ (ODA) ໃຫ້ຫຼາຍຂຶ້ນ, ພ້ອມທັງເພີ່ມທະວີການຄຸ້ມຄອງການນຳໃຊ້ທຸກແຫຼ່ງທຶນການຊ່ວຍເຫຼືອທາງການເພື່ອການພັດທະນາ, ການປະຕິບັດພັນທະຕ່າງໆ ໃຫ້ສອດຄ່ອງກັບດຳລັດ ສະບັບເລກທີ 75/ນຍ ແລະ ນິຕິກຳທີ່ກ່ຽວຂ້ອງໃຫ້ມີປະສິດທິພາບ, ປະສິດທິຜົນສູງສຸດ ໂດຍສະເພາະໃຫ້ສອດຄ່ອງກັບທິດການພັດທະນາຂອງລັດຖະບານໂດຍການຫັນກາຊ່ວຍເຫຼືອທາງດ້ານການເງິນ ແລະ ເຕັກນິກວິຊາການ, ຊ່ຽວຊານພາຍໃນ ແລະ ຕ່າງປະເທດໄປສູ່ການພັດທະນາຊົນນະບົດ ເຂດຫ່າງໄກສອກຫຼີກ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນໃຫ້ຫຼາຍຂຶ້ນ.
2. ຊຸກຍູ້ສົ່ງເສີມ ແລະ ອຳນວຍຄວາມສະດວກໃນດ້ານຕ່າງໆ ໃຫ້ແກ່ບັນດາຄູ່ຮ່ວມພັດທະນາ ແລະ ປະເທດເພື່ອນມິດຍຸດທະສາດ ໃນການປະຕິບັດຕາມສັນຍາທີ່ໄດ້ມີການຕົກລົງກັນໄວແລ້ວ ກ່ຽວກັບການຊ່ວຍເຫຼືອໃນດ້ານຕ່າງໆ

ໃຫ້ໄປຕາມແຜນທີ່ວາງໄວ້ ຄຽງຄູ່ກັບການລະດົມ ແລະ ຍາດແຍ່ງແຫຼ່ງທຶນການຊ່ວຍເຫຼືອທາງການໄປຕາມທິດການຫັນການຊ່ວຍເຫຼືອທາງດ້ານການເງິນ ແລະ ເຕັກນິກວິຊາການໄປສູ່ການພັດທະນາຊົນນະບົດເຂດຫ່າງໄກສອກຫຼີກ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນໃຫ້ຫຼາຍຂຶ້ນ ເພື່ອສ້າງພື້ນຖານເສດຖະກິດໃຫ້ມີຄວາມເຂັ້ມແຂງ ແລະ ຍືນຍົງ ຕິດພັນກັບການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂອງປະຊາຊົນ ທີ່ສົ່ງເສີມຄວາມເຂັ້ມແຂງ, ການຜະລິດເປັນສິນຄ້າ ແລະ ຍົກສູງຄຸນນະພາບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນທັງສອດຄ່ອງກັບຍຸດທະສາດຂອງການພັດທະນາ ແລະ ສະພາບເງື່ອນໄຂຕົວຈິງຂອງປະເທດໃນປະຈຸບັນ.

3. ເພີ່ມທະວີໃນການຄຸ້ມຄອງການນຳໃຊ້ທຸກແຫຼ່ງທຶນການຊ່ວຍເຫຼືອທາງການເພື່ອການພັດທະນາ ໃຫ້ມີປະສິດທິພາບ, ປະສິດທິຜົນສູງສຸດ ໂດຍການນຳໃຊ້ລະບົບຄຸ້ມຄອງການຊ່ວຍເຫຼືອທາງການ ເພື່ອການພັດທະນາທີ່ທັນສະໄໝ ແລະ ຊຸກຍູ້ໃຫ້ເປັນລະບົບແຫ່ງຊາດ ເພື່ອໃຫ້ທຸກໆໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາ ສາມາດນຳໃຊ້ໄດ້ຢ່າງທົ່ວເຖິງ ພ້ອມທັງຍົກສູງເອົາໃຈໃສ່ໃນການຄຸ້ມຄອງການຈັດຕັ້ງປະຕິບັດໂຄງການໃຫ້ໄປຕາມຈຸດປະສົງເປົ້າໝາຍຂອງໂຄງການ, ເຂັ້ມງວດດ້ານລະບຽບຫຼັກການເພື່ອຮັບ ປະກັນປະສິດທິຜົນ ແລະ ຄວາມຍືນຍົງຂອງໂຄງການ.
4. ຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຈາກບັນດາຄູ່ຮ່ວມພັດທະນາໂດຍການສ້າງແຜນຄວາມຕ້ອງການທຶນຊ່ວຍເຫຼືອເພື່ອການພັດທະນາຕາມຜົນໄດ້ຮັບທີ່ມີສ່ວນຮ່ວມຂອງທຸກພາກສ່ວນກ່ຽວຂ້ອງຢູ່ສູນກາງ ແລະ ທ້ອງຖິ່ນ ຄຽງຄູ່ກັບການຈັດຕັ້ງຜັນຂະຫຍາຍຜົນກອງປະຊຸມໂຕະມົນປະຈຳປີ 2018 ແລະ ຖະແຫຼງການວຽງຈັນ ວ່າດ້ວຍການເປັນຄູ່ຮ່ວມ ເພື່ອການຮ່ວມມືທີ່ມີປະສິດທິຜົນ ສາມາດດຶງດູດ ແລະ ຍາດແຍ່ງທຶນຊ່ວຍເຫຼືອເພື່ອການພັດທະນາໃຫ້ຫຼາຍຂຶ້ນ. ຄົ້ນຄວ້າ ແລະ ພິຈາລະນາໂຄງການຂໍການຊ່ວຍເຫຼືອ ແລະ ກູ້ຢືມຈາກຕ່າງປະເທດຢ່າງມີຈຸດສຸມ ໂດຍສຸມໃສ່ໂຄງການທີ່ໃຫ້ຜົນຕອບແທນ.
5. ບັນດາກະຊວງ-ອົງການ ແລະ ທ້ອງຖິ່ນຕ້ອງ ໄດ້ສະຫຼຸບຜົນການຈັດຕັ້ງປະຕິບັດໂຄງການ ຊກພ ທີ່ຕົນໄດ້ຮັບເປັນປະຈຳແຕ່ລະງວດ (3 ເດືອນ, 6 ເດືອນ, 9 ເດືອນ ແລະ 12 ເດືອນ) ແລ້ວລາຍງານໃຫ້ກະຊວງແຜນການ ແລະ ການລົງທຶນ ຕາມແຕ່ລະແຫຼ່ງທຶນຊ່ວຍເຫຼືອ ແລະ ຜູ້ໃຫ້ທຶນ, ຄົ້ນຄວ້າສັງລວມ ແລະ ຕິດຕາມໂຄງການທີ່ມີການນຳໃຊ້ບ້ວງທຶນດັ່ງກ່າວໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ເພື່ອເປັນບ່ອນອີງໃນການສ້າງແຜນການປີຕໍ່ໄປ.

### 2.4. ການລະດົມ ແລະ ການຈັດຕັ້ງປະຕິບັດການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ (ຈຳນວນ 23.086,13 ຕື້ກີບ)

1. ເອົາໃຈໃສ່ຕິດຊຸກຍູ້ສົ່ງເສີມບັນດາໂຄງການທີ່ໄດ້ເຊັນສັນຍາ ແລະ ບັນດາໂຄງການຢູ່ໃນຂັ້ນຕອນການສະເໜີເຈດຈຳນົງເພື່ອຂໍລົງທຶນໃນຂົງເຂດຕ່າງໆ ແຕ່ຕ້ອງມີການຄັດຈ້ອນໄປຕາມທິດທີ່ລັດຖະບານວາງອອກ ຮັບປະກັນຄວາມໂປ່ງໃສ, ວ່ອງໄວ ແລະ ປະຢັດ ໂດຍສະເພາະໃຫ້ເອົາໃຈໃສ່ຊຸກຍູ້ສົ່ງເສີມ ແລະ ຕິດຕາມການຈັດຕັ້ງປະຕິບັດໂຄງການໃຫຍ່ທີ່ເປັນຍຸດທະສາດຂອງລັດຖະບານໃຫ້ສຳເລັດຕາມຕາມແຜນທີ່ວາງໄວ້ເປັນຕົ້ນ: ໂຄງການກໍ່ສ້າງທາງລົດໄຟລາວ-ຈີນ, ທາງດ່ວນ, ທ່າເຮືອຫຼວງອາງ, ເມືອງອັດລະລິຍາ (smart City) ເຂດເສດຖະກິດຕາມທາງຫຼວງລົດໄຟ ແລະ ອື່ນໆ ເພື່ອເຮັດໂຄງການເຫຼົ່ານີ້ເປັນພື້ນຖານແກ່ດຶງການພັດທະນາໃນປີ 2019 ແຕ່ຕ້ອງຮັບປະກັນໃຫ້ມີຄວາມສະຫງົບທາງດ້ານສັງຄົມ, ບໍ່ສົ່ງຜົນກະທົບຕໍ່ສິ່ງແວດລ້ອມ, ຮັບປະກັນຄຸນນະພາບ ແລະ ບັນລຸໄດ້ຕາມລະດັບຄາດໝາຍທີ່ວາງໄວ້.
2. ສົມທົບກັບພາກສ່ວນກ່ຽວຂ້ອງ ສ້າງແຜນການຈັດຕັ້ງປະຕິບັດ ຄຳສັ່ງເລກທີ 02/ນຍ ວ່າດ້ວຍການປັບປຸງບັນດາລະບຽບການ ແລະ ກົນໄກປະສານງານໃນການດຳເນີນທຸລະກິດ ເພື່ອຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດຄຳສັ່ງດັ່ງກ່າວ ເຮັດໃຫ້ການຈັດຕັ້ງປະຕິບັດບັນດາ 10 ຕົວຊີ້ວັດ ທີ່ຍັງບໍ່ທັນສາມາດແຂ່ງຂັນກັບບັນດາປະເທດຕ່າງໆໄດ້ ເຊັ່ນ: ຕົວຊີ້ວັດ ❶ການຈົດທະບຽນເລີ່ມຕົ້ນທຸລະກິດ (ໄດ້ທີ 180); ❷ການຂໍອະນຸມັດປຸກສ້າງ (ໄດ້ທີ 99);❸ການຂໍເອົາໄຟຟ້າເຂົ້າຕິດຕັ້ງ (ໄດ້ທີ 156); ❹ການຈົດທະບຽນຊັບສິນ (ໄດ້ທີ 85); ❺ການເຂົ້າເຖິງສິນ

ເຊື່ອ (ໄດ້ທີ 73); ❻ການປົກປ້ອງຜູ້ລົງທຶນລາຍນ້ອຍ (ໄດ້ທີ 174); ❼ການມອບອາກອນກຳໄລ (ໄດ້ທີ 155); ❽ການອຳນວຍຄວາມສະດວກການຄ້າຂາອອກ-ຂາເຂົ້າ (ໄດ້ທີ 76); ❾ການປະຕິບັດຕາມສັນຍາ (ໄດ້ທີ 162) ແລະ ❿ ການແກ້ໄຂການລົ້ມລະລາຍ (ໄດ້ທີ 168) ໃຫ້ມີອັນດັບທີ່ດີຂຶ້ນ ເພື່ອເອີ້ນຄວາມເຊື່ອໝັ້ນ ແລະ ຮັບປະກັນໃຫ້ແກ່ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ ໃນການດຳເນີນທຸລະກິດໃນ ສປປ ລາວ ມີຄວາມໂປ່ງໃສຍຸດຕິທຳ ແລະ ປະຢັດຕົ້ນທຶນຕາມທີ່ນະໂຍບາຍທີ່ລັດຖະບານໄດ້ກຳນົດໄວ້, ພ້ອມທັງ ປັບປຸງນິຕິກຳໃນການຊຳລະອາກອນຂອງຫົວໜ່ວຍທຸລະກິດຈາກ 4 ງວດມາເປັນ 1 ງວດຕໍ່ປີ, ນິຕິກຳກ່ຽວກັບ PPP, BOT, Negative list, ຄຳແນະນຳວ່າດ້ວຍການໃຫ້ນະໂຍບາຍສົ່ງເສີມການລົງທຶນດ້ານພາສີ ແລະ ອາກອນມູນຄ່າເພີ່ມສຳລັບແຜນນຳເຂົ້າຂອງວິສາຫະກິດ ແລະ ອື່ນໆ ຄຽງຄູ່ເຜີຍແຜ່ດຳລັດ, ກົດໝາຍ ແລະ ນິຕິກຳກ່ຽວກັບການສົ່ງເສີມການລົງທຶນ ເພື່ອສ້າງຄວາມເຊື່ອໝັ້ນໃຫ້ແກ່ນັກລົງທຶນໃນຂອບເຂດທົ່ວປະເທດ.

3. ສືບຕໍ່ຜັນຂະຫຍາຍຄຳສັ່ງເລກທີ 12/ນຍ ວ່າດ້ວຍການຈັດຕັ້ງປະຕິບັດ 8 ມາດຕະການຊຸກຍູ້ເສດຖະກິດຢ່າງມີຈຸດສຸມ ເພື່ອຕິດຕາມກວດກາ ແລະ ປະເມີນຜົນລາຍງານລັດຖະບານ ແລະ ສະພາແຫ່ງຊາດ ເປັນແຕ່ລະໄລຍະ ໂດຍການສົມທົບແໜ້ນກັບພາກສ່ວນທີ່ກ່ຽວຂ້ອງຄົ້ນຄວ້າປັບປຸງນະໂຍບາຍ ແລະ ກົນໄກ ໃນການຫຼຸດຂັ້ນຕອນການອອກທະບຽນວິສາຫະກິດໃຫ້ກະທັດທັດ, ວ່ອງໄວ ແລະ ໂປ່ງໃສ; ປັບປຸງຂັ້ນຕອນການສ້າງ ແລະ ການເຄື່ອນໄຫວທຸລະກິດຢູ່ ສປປລາວ ໃຫ້ກະທັດຮັດລົງ ແລະ ປະຢັດຕົ້ນທຶນໃນການດຳເນີນງານ ເພື່ອດຶງດູດການລົງທຶນຂອງພາກເອກະຊົນ ເຂົ້າໃນການພັດທະນາໃຫ້ເປັນຮູບປະທຳຫຼາຍຂຶ້ນ ເປັນຕົ້ນແມ່ນການລົງທຶນໃສ່ພື້ນຖານໂຄ່ງລ່າງ ໃນຮູບແບບ BOT ແລະ PPP ເພື່ອຫຼຸດຜ່ອນການແບກຫາບໜີ້ສິນຈາກການລົງທຶນຂອງລັດລົງເທື່ອລະກ້າວ.
4. ຕ້ອງໄດ້ມີການຕິດຕາມກວດກາຄວາມຄືບໜ້າຂອງບັນດາໂຄງການລົງທຶນໃນຂະແໜງການ ແລະ ທ້ອງຖິ່ນຂອງຕົນທີ່ໄດ້ຮັບອະນຸມັດໃນຂັ້ນຕ່າງໆ ຢ່າງເປັນປົກກະຕິ, ຊຸກຍູ້ໃຫ້ມີການນຳເຂົ້າທຶນໂຕຈິງ ແລະ ມີການຊຳລະສະສາງຜ່ານລະບົບທະນາຄານ. ນອກຈາກນີ້ ຕ້ອງໄດ້ມີການຕິດຕາມລາຍງານຕົວເລກການລົງທຶນຂອງພາກເອກະຊົນທັງພາຍໃນ ແລະ ຕ່າງປະເທດ ຢູ່ຂະແໜງການ ແລະ ແຂວງຂອງຕົນໃຫ້ກະຊວງແຜນການ ແລະ ການລົງທຶນ ເພື່ອໃຫ້ສາມາດຄຸ້ມຄອງການຈັດຕັ້ງປະຕິບັດໂຄງການໃຫ້ໄປຕາມທິດ ແລະ ເກີດຜົນປະໂຫຍດສູງສຸດໃຫ້ແກ່ລັດກໍຄືປະຊາຊົນ.
5. ສືບຕໍ່ຈັດກອງປະຊຸມພົບປະແລກປ່ຽນຄວາມຄິດເຫັນລະຫວ່າງນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ ແລະ ພາກລັດດ້ວຍກັນ ເພື່ອນຳມາພິຈາລະນາຄົ້ນຄວ້າອອກເປັນນະໂຍບາຍຊ່ວຍໜູນ ໂດຍນຳເອົາບົດຮຽນດ້ານດີຂອງຫົວໜ່ວຍທຸລະກິດທີ່ມີຜົນການປະກອບການດີໃຫ້ມີການຍ້ອງຍໍຕາມຄວາມເໝາະສົມ ແລະ ຊຸກຍູ້ຊ່ວຍທາງດ້ານນະໂຍບາຍ ແລະ ດ້ານອື່ນໆ ໃຫ້ແກ່ບັນດາຫົວໜ່ວຍທຸລະກິດທີ່ຫາກໍເລີ່ມຕົ້ນ ແລະ ພົບຄວາມຫຍຸ້ງຍາກທາງດ້ານການເຂົ້າເຖິງແຫຼ່ງທຶນ ແລະ ຂອດຂັ້ນລະບຽບການຕ່າງໆຂອງລັດ.

### 2.5. ການລົງທຶນໃນຮູບແບບສິນເຊື່ອທະນາຄານ

ເພື່ອເປັນການລະດົມການລົງທຶນທົ່ວສັງຄົມຜ່ານລະບົບທະນາຄານ, ທະນາຄານທຸລະກິດເພີ່ມທະວີການລະດົມເງິນຝາກໃຫ້ໄດ້ຕາມລະດັບຄາດໝາຍ ແລະ ຕ້ອງປະຕິບັດໃຫ້ໄດ້ຕາມແຜນການປ່ອຍສິນເຊື່ອ ເພື່ອເປັນແຮງຊຸກດັນ ແລະ ກະຕຸ້ນເສດຖະກິດ ໃນປີ 2019 ໃຫ້ຂະຫຍາຍຕົວໃນລະດັບທີ່ໝັ້ນທ່ຽງ, ເອົາໃຈໃສ່ຕິດຕາມກວດກາການນຳໃຊ້ສິນເຊື່ອໃຫ້ຖືກຕາມເປົ້າໝາຍ ແລະ ເກີດດອກດອກຜົນ ຄຽງຄູ່ໃຫ້ທະນາຄານທຸລະກິດ, ທະນາຄານກະສິກຳ ແລະ ທະນາຄານນະໂຍບາຍ ເພີ່ມການປ່ອຍສິນເຊື່ອໃຫ້ແກ່ເຂດຊົນນະບົດ ເພື່ອຊຸກຍູ້ສົ່ງເສີມການຜະລິດເປັນສິນຄ້າຕິດພັນການສົ່ງເສີມຄວາມຮູ້ຄວາມເຂົ້າໃຈກ່ຽວກັບຄວາມຕ້ອງການຂອງຕະຫຼາດ ເຮັດໃຫ້ປະຊາຊົນໃນເຂດທຸກຍາກ ຫ່າງໄກສອກຫຼີກມີລາຍຮັບທີ່ດີຂຶ້ນ ສາມາດຫຼຸດພົ້ນອອກຈາກຄວາມທຸກຍາກໄດ້ເທື່ອລະກ້າວ.

## II. ການຕິດຕາມກວດກາ ແລະ ການປະເມີນຜົນ

### 1. ການຊຸກຍູ້ການຂະຫຍາຍໂຕຂອງເສດຖະກິດ

ໃຫ້ຂະແໜງການ ແລະ ທ້ອງຖິ່ນ ເອົາໃຈໃສ່ຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນການລົງທຶນຂອງລັດ ພ້ອມທັງເຜີຍແຜ່ແນະນຳ ເພື່ອສ້າງຄວາມເຂົ້າໃຈ ແລະ ເອກະພາບທາງດ້ານວິຊາການ, ຮັບປະກັນການຈັດຕັ້ງປະຕິບັດຖືກທິດ, ບັນລຸຄາດໝາຍຂອງແຜນການ ແລະ ສອດຄ່ອງຕາມລະບຽບກົດໝາຍ ໂດຍສະເພາະບັນດາໂຄງການທີ່ຊຸກຍູ້ການເຕີບໂຕທາງດ້ານເສດຖະກິດ-ສັງຄົມຢ່າງມີຄຸນນະພາບ ເຊັ່ນ: ໂຄງການລົງທຶນຂອງລັດ, ໂຄງການລົງທຶນຂອງພາກເອກະຊົນພາຍໃນ ແລະ ຕ່າງປະເທດ, ການຊ່ວຍເຫຼືອທາງການເພື່ອການພັດທະນາ ໃຫ້ສາມາດດຳເນີນຕາມແຜນ ແລະ ບັນລຸໄດ້ຕາມລະດັບຄາດໝາຍທີ່ວາງໄວ້.

### 2. ການຈັດຕັ້ງປະຕິບັດບັນດາຕົວຊີ້ວັດ ແລະ ຕົວເລກຄາດໝາຍຂອງການພັດທະນາແບບຍືນຍົງ

ໃຫ້ຂະແໜງການ ແລະ ທ້ອງຖິ່ນເປັນເຈົ້າການໃນການຊຸກຍູ້, ສົ່ງເສີມ, ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດບັນດາຕົວຊີ້ວັດຂອງການພັດທະນາແບບຍືນຍົງທີ່ໄດ້ເຊື່ອມສານເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ທີ່ໄດ້ເຊື່ອມສານເຂົ້າໃນແຜນການ 5 ປີ (2016-2020) ມີ 92 ຕົວຊີ້ວັດ ແລະ ໂຄງການລົງທຶນຂອງລັດຂອງຂະແໜງການ ແລະ ທ້ອງຖິ່ນຕົນທີ່ຮັບໃຊ້ໃຫ້ແກ່ເປົ້າໝາຍດັ່ງກ່າວ ໃຫ້ເອົາໃຈໃສ່ຢ່າງໃກ້ຊິດ ເພື່ອຈັດຕັ້ງປະຕິບັດແຜນງານ ແລະ ໂຄງການໃນຂົງເຂດສຶກສາ, ສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ-ສັງຄົມ ແລະ ຂົງເຂດຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ຂົງເຂດອື່ນໆ ທີ່ຕິດພັນກັບການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນຕາມທິດການພັດທະນາສີຂຽວ ແລະ ຍືນຍົງ. ສະເໜີສະຫຼຸບໃຫ້ເຫັນຜົນການຈັດຕັ້ງປະຕິບັດ SDGs ຂອງຂະແໜງການ ແລະ ທ້ອງຖິ່ນຕົນ ແລ້ວລາຍງານຕາມແຜນປະຈຳປີຂອງຕົນ.

### 3. ການປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ຂະແໜງການ ແລະ ທ້ອງຖິ່ນຕ້ອງເອົາໃຈໃສ່ຕິດຕາມ, ກວດກາ ແລະ ປະເມີນການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ, ໂຄງການສົມທົບທຶນຊ່ວຍເຫຼືອທາງການເພື່ອການພັດທະນາ ແລະ ບັນດາໂຄງການລົງທຶນເອກະຊົນພາຍໃນ ແລະ ຕ່າງປະເທດ ໃຫ້ມີຄວາມສອດຄ່ອງກົມກຽວລະຫວ່າງການພັດທະນາເສດຖະກິດ-ສັງຄົມ ຕິດພັນກັບການປົກປັກຮັກສາ ແລະ ນຳໃຊ້ຊັບພະຍາກອນທຳມະຊາດໃຫ້ຄຸ້ມຄ່າ, ເກີດປະສິດທິພາບ, ປະສິດທິຜົນສູງ ຕາມທາງທິດການພັດທະນາສີຂຽວ ແລະ ຍືນຍົງ ເພື່ອຫຼີກລ້ຽງຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ແລະ ຜົນກະທົບທາງລົບຈາກບັນດາໂຄງການພັດທະນາທີ່ອາດເກີດຂຶ້ນໃນອະນາຄົດ.

### 4. ການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຕິດພັນກັບວຽກ 3 ສ້າງ

ໃຫ້ຂະແໜງການ ແລະ ທ້ອງຖິ່ນ ເພີ່ມທະວີຂອດປະສານສົມທົບກັບຂະແໜງແຜນການ ແລະ ການລົງທຶນ, ຂະແໜງສະຖິຕິ ແລະ ຂະແໜງການອື່ນໆທີ່ກ່ຽວຂ້ອງ ເພື່ອຕິດຕາມກວດກາການຈັດຕັ້ງປະຕິບັດບັນດາແຜນງານ, ໂຄງການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໂດຍສະເພາະບັນດາແຜນງານໂຄງການທີ່ກຳລັງຈັດຕັ້ງປະຕິບັດໃນເຂດຈຸດສຸມຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນຄຸ້ມຄອງ ແລະ ບັນດາໂຄງການທີ່ໄດ້ການຊ່ວຍເຫຼືອຈາກອົງການຈັດຕັ້ງສາກົນ ແລະ ບັນດາປະເທດເພື່ອນມິດຍຸດທະສາດ ເພື່ອໃຫ້ສາມາດຄຸ້ມຄອງ ແລະ ໄປຕາມທິດທາງ, ໜ້າວຽກຈຸດສຸມ ໂດຍສະເພາະໃນເຂດຈຸດສຸມພັດທະນາຂອງລັດຖະບານ ໃຫ້ບັນລຸໄດ້ລະດັບຄາດໝາຍທີ່ກຳນົດໄວ້. ພ້ອມນີ້, ສະເໜີໃຫ້ທຸກພາກສ່ວນສະຫຼຸບໂຄງການທີ່ນອນໃນຂະແໜງການ ແລະ ທ້ອງຖິ່ນຕົນຮັບຜິດຊອບ ວ່າມີຈຳນວນ ແລະ ທຶນເທົ່າໃດ? ຮັບໃຊ້ວຽກງານທຸກຍາກທີ່ນອນໃນຈຸດສຸມທຸກຍາກ, ເມືອງທຸກຍາກແລ້ວລາຍງານເວລາສະຫຼຸບແຜນການລົງທຶນຂອງລັດ 6 ເດືອນ ປະຈຳປີ 2019 ສົ່ງຂະແໜງແຜນການ ແລະ ການລົງທຶນ ຂັ້ນແຂວງ, ຂັ້ນກະຊວງເພື່ອສັງລວມລາຍງານກະຊວງແຜນການ ແລະ ການລົງທຶນ.

## III. ການກະກຽມສ້າງແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນການລົງທຶນຂອງລັດ ປະຈຳປີ 2020

### 1. ການກະກຽມສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງ ປະຈຳປີ 2020

ແຜນພັດທະນາເສດຖະກິດ-ສັງຄົມແຫ່ງ ປະຈຳປີ 2020 ແມ່ນປີສຸດທ້າຍໃນການຜັນຂະຫຍາຍແຜນ 5 ປີຄັ້ງທີ VIII (2016-2020) ເປັນແຜນສືບຕໍ່ບຸກທະລຸ ແລະ ມີຄວາມສຳຄັນຫຼາຍ ໃນການສືບຕໍ່ຈັດຕັ້ງປະຕິບັດຍຸດທະສາດການພັດທະນາເສດຖະກິດ-ສັງຄົມ 10 ປີ (2021-2025), ວິໄສທັດຮອດ ປີ 2030, ເພື່ອສ້າງບາດລ້ຽວໃໝ່ໃນການພັດທະນາໃຫ້ກາຍເປັນປະເທດກຳລັງພັດທະນາທີ່ມີລາຍຮັບປານກາງສູງຕາມທິດເສດຖະກິດ-ສັງຄົມພູມປັນຍາ, ສີຂຽວ ແລະ ຍືນຍົງ, ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຂອງພັກຄັ້ງທີ X ໃຫ້ປະກົດຜົນເປັນຈິງ; ເປັນການສ້າງບາດກ້າວໃໝ່ໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມຢ່າງເຂັ້ມແຂງ, ໝັ້ນທ່ຽງ ແລະ ຍືນຍົງ. ດັ່ງນັ້ນ, ໃນການກະກຽມສ້າງແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2020 ຕ້ອງໄດ້ເອົາໃຈໃສ່ຄື:

(1) ໃຫ້ຂະແໜງການ ແລະ ທ້ອງຖິ່ນ ຕ້ອງໄດ້ເພີ່ມທະວີຄວາມເອົາໃຈໃສ່ປະສານສົມທົບກັບຂະແໜງສະຖິ ໃນການທົບທວນຄືນການຈັດຕັ້ງແຜນພັດທະນາເສດຖະກິດ-ສັງຄົມ ແລະ ການພັດທະນາຂອງຂະແໜງການ ແລະ ທ້ອງຖິ່ນຕົນໃນຊຸມປີຜ່ານມາ ເພື່ອຊອກໃຫ້ເຫັນດ້ານດີ ແລະ ຂໍ້ຄົງຄ້າງ ທີ່ຕ້ອງໄດ້ສຸມໃສ່ແກ້ໄຂບັນດາຂໍ້ຄົງຄ້າງທີ່ເປັນສິ່ງກີດຂວາງການພັດທະນາໃນໄລຍະຜ່ານມາ ທັງເປັນການກະກຽມຄວາມພ້ອມນຳພາປະເທດຊາດຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາໃນປີ 2025, ຫັນປະເທດເປັນອຸດສະຫະກຳ ແລະ ທັນສະໄໝ ຕິດພັນກັບການປົກປັກຮັກສາສິ່ງແວດລ້ອມ ແລະ ເປີດກວ້າງການເຊື່ອມໂຍງ, ເຊື່ອມຈອດກັບພາກພື້ນ ແລະ ສາກົນຢ່າງເປັນເຈົ້າການ ຊຶ່ງເປັນການສານຕໍ່ ແລະ ເສີມຂະຫຍາຍໝາກຜົນທີ່ຊາດລາວຍາດມາໄດ້ໃນໄລຍະຜ່ານມາ, ທັງເປັນການສ້າງພື້ນຖານໃໝ່ຈຳນວນໜຶ່ງ ໃນການພັດທະນາໃນຕໍ່ໜ້າ.

(2) ຕ້ອງອີງໃສ່ກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບເລກທີ 72/ສພຊ, ລົງວັນ 15 ທັນວາ 2015, ດຳລັດວ່າດ້ວຍການສ້າງ ແລະ ຄຸ້ມຄອງຄອງແຜນພັດທະນາເສດຖະກິດ-ສັງຄົມ, ທິດທາງ ແລະ ບັນດາຄາດໝາຍໃນແຜນດັດແກ້ 4 ປີຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020), ຍຸດທະສາດ ແລະ ແຜນພັດທະນາຂອງຂະແໜງການ, ໜ້າວຽກຈຸດສຸມເປົ້າໝາຍ ແລະ ໝາກຜົນ ທີ່ສອດຄ່ອງກັບທ່າແຮງຈຸດພິເສດຂອງຂະແໜງການ ແລະ ທ້ອງຖິ່ນຕົນ ເຮັດແຜນການປະຈຳປີ 2020 ເປັນແຜນທີ່ສອດຄ່ອງແທດເໝາະກັບສະພາບຄວາມເປັນຈິງ ແລະ ສາມາດຈັດຕັ້ງປະຕິບັດໄດ້.

### 2. ວິທີການໃນການສ້າງແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນການລົງທຶນຂອງລັດ

#### 2.1 ຈຸດໝາຍລວມຂອງແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2020

(1) ເພື່ອສ້າງການຫັນປ່ຽນໃໝ່ຢ່າງໜັກແໜ້ນໃນການພັດທະນາເສດຖະກິດ-ສັງຄົມ ຕາມທິດການຂະຫຍາຍຕົວຂອງເສດຖະກິດໃນຈັງຫວະທີ່ໝັ້ນທ່ຽງ, ຄຽງຄູ່ກັບການພັດທະນາທີ່ມີຄຸນນະພາບ, ສົມດຸນ, ຕໍ່ເນື່ອງ, ຍືນຍົງ ແລະ ສີຂຽວ.

(2) ເຮັດໃຫ້ປະເທດຊາດເຂັ້ມແຂງ, ສັງຄົມມີຄວາມສະຫງົບຮອບດ້ານ, ຍົກສູງຄຸນນະພາບຊີວິດທັງດ້ານຮ່າງກາຍ ແລະ ຈິດໃຈ, ພັດທະນາຊົນນະບົດຫຼຸດຜ່ອນຄວາມແຕກໂຕນ ເພື່ອແກ້ໄຂຄວາມທຸກຍາກຂອງປະຊາຊົນຕິດພັນກັບເປົ້າໝາຍການເຕີບໂຕສີຂຽວ ແລະ ການພັດທະນາແບບຍືນຍົງ (SDGs) ແລະ ສືບຕໍ່ສ້າງເງື່ອນໄຂຫຼຸດພົ້ນອອກຈາກປະເທດດ້ອຍພັດທະນາ (LDC) ດ້ວຍການຮັກສາ 2 ເງື່ອນໄຂ (GNI ແລະ HAI) ທີ່ຫຼຸດພົ້ນແລ້ວ ແລະ ສຸມໃສ່ສ້າງສະພາບແວດລ້ອມເພື່ອບັນລຸເງື່ອນໄຂ EVI ທີ່ຍັງບໍ່ທັນບັນລຸ.

(3) ຍົກສູງຄວາມສັກສິດ ແລະ ປະສິດທິພາບຂອງການບໍລິຫານຄຸ້ມຄອງລັດ, ຫັນການປົກຄອງໄປຕາມທິດລັດແຫ່ງກົດໝາຍ.

(4) ເສີມຂະຫຍາຍ ແລະ ໝູນໃຊ້ທ່າແຮງໄດ້ປຽບໃນເວທີສາກົນເພື່ອຍາດແຍ່ງຜົນປະໂຫຍດຈາກນະໂຍບາຍການທູດປ້ອງກັນເທດ, ນະໂຍບາຍເປີດກວ້າງການຮ່ວມມື ແລະ ເຊື່ອມໂຍງ-ເຊື່ອມຈອດເສດຖະກິດກັບພາກພື້ນ ແລະ

ສາກົນຢ່າງຮອບດ້ານເປັນຕົ້ນ: ຜົນປະໂຫຍດຈາກການເຂົ້າເປັນປະຊາຄົມອາຊຽນ, ການເປັນສະມາຊິກຂອງອົງການການຄ້າໂລກ ແລະ ອື່ນໆ.

**2.2 ບາງວຽກຈຸດສຸມທີ່ຕ້ອງເອົາໃຈໃສ່ໃນການກະກຽມສ້າງແຜນພັດທະນາເສດຖະກິດ-ສັງຄົມ ປະຈໍາປີ 2020**

(1) ໃຫ້ຂະແໜງການ ແລະ ທ້ອງຖິ່ນ ສືບຕໍ່ຄົ້ນຄວ້າຕີລາຄາຢ່າງພາວະວິໄສການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈໍາປີ 2020 ໂດຍລົງເລິກຂະແໜງການ ແລະ ທ້ອງຖິ່ນຕົນເອງ ເພື່ອໃຫ້ເຫັນໄດ້ສະພາບຄວາມເປັນຈິງ, ຜົນສໍາເລັດ, ຈຸດອ່ອນ, ຂໍ້ຄົງຄ້າງ ແລະ ສິ່ງທ້າທາຍ ເພື່ອເປັນບ່ອນອີງ ໃຫ້ແກ່ການຄົ້ນຄວ້າການສ້າງແຜນ 5 ປີ ຄັ້ງທີ IX (2021-2025) ໃຫ້ຖືກຕ້ອງຕາມສະພາບຄວາມເປັນຈິງ, ມີຄວາມສອດຄ່ອງ ແລະ ສາມາດຈັດຕັ້ງປະຕິບັດໄດ້ຢ່າງມີຜົນສູງ.

(2) ອີງໃສ່ຜົນຂອງການຕີລາຄາດັ່ງກ່າວ ໃຫ້ກໍານົດຫົວຂໍ້ຄົ້ນຄວ້າໃນຂົງເຂດຕ່າງໆ ເພື່ອເປັນພື້ນຖານຮັບໃຊ້ໃຫ້ແກ່ການສ້າງແຜນ 5 ປີຄັ້ງທີ IX ຢ່າງມີວິທະຍາສາດ ແລະ ສອດຄ່ອງກັບສະພາບການພັດທະນາຂອງປະເທດໃນໄລຍະໃໝ່ ແລະ ສອດຄ່ອງກັບສະພາບຄວາມເປັນຈິງ ແລະ ທ່າແຮງຂອງຂະແໜງການ ແລະ ທ້ອງຖິ່ນ ເພື່ອເຮັດໃຫ້ການພັດທະນາໄປຕາມທິດທີ່ພັກ ແລະ ລັດຖະບານວາງໄວ້.

**2.3. ວິທີການໃນການສ້າງແຜນການລົງທຶນຂອງລັດ ປະຈໍາປີ 2020**

(1) ໃຫ້ຂະແໜງການ ແລະ ທ້ອງຖິ່ນ ດໍາເນີນການປະເມີນໂຄງການລົງທຶນຂອງລັດທີ່ມີເປົ້າໝາຍເອົາເຂົ້າແຜນ ປະຈໍາປີ 2020 ຕັ້ງແຕ່ຫົວທີ ເລີ່ມແຕ່ວັນທີ 1 ເດືອນມັງກອນ ເປັນຕົ້ນໄປ ໂດຍໃຫ້ພາກສ່ວນທີ່ກ່ຽວຂ້ອງນໍາສົ່ງເອກະສານໂຄງການໃຫ້ພາກສ່ວນຮັບຜິດຊອບ ດໍາເນີນການປະເມີນຕາມສິດ, ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ ໂດຍຮັບປະກັນປະສິດທິພາບ, ປະສິດທິຜົນໂຄງການ ແລະ ທຸກໂຄງການທີ່ຈະຮັບພິຈາລະນາເຂົ້າແຜນ ປະຈໍາປີ 2020 ຕ້ອງຜ່ານການປະເມີນໂຄງການ ແລະ ສອດຄ່ອງທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຢ່າງເຂັ້ມງວດ.

(2) ສໍາລັບຂັ້ນສູນກາງໃຫ້ຂະແໜງການ ແລະ ທ້ອງຖິ່ນ ນໍາສົ່ງເອກະສານຂອງໂຄງການທີ່ມີມູນຄ່າສູງກວ່າ 20 ຕື້ກີບໃຫ້ກົມປະເມີນຜົນ, ກະຊວງແຜນການ ແລະ ການລົງທຶນ ດໍາເນີນການປະເມີນຕາມສິດ, ພາລະບົດບາດ ແລະ ຄວາມຮັບຜິດຊອບທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບເລກທີ 72/ສພຊ ຊ້າສຸດບໍ່ໃຫ້ກາຍວັນທີ 15 ມິຖຸນາ 2019.

(3) ຂັ້ນແຂວງ, ຂັ້ນເມືອງສໍາລັບໂຄງການປະເພດ V ແມ່ນນໍາສົ່ງເອກະສານໃຫ້ພະແນກແຜນການ ແລະ ການລົງທຶນປະຈໍາແຂວງ, ໂຄງການປະເພດ I, II, III ແລະ IV ແມ່ນນໍາສົ່ງເອກະສານໂຄງການບໍ່ໃຫ້ກາຍ 15 ມິຖຸນາ 2019.

(4) ສໍາລັບໂຄງການປະເພດ V ຂອງແຂວງ, ນະຄອນຫຼວງວຽງຈັນ ພາຍຫຼັງຈາກຜ່ານການປະເມີນແລ້ວ ໃຫ້ສົ່ງລາຍລະອຽດໂຄງການໃຫ້ກົມປະເມີນຜົນ, ກະຊວງແຜນການ ແລະ ການລົງທຶນບໍ່ໃຫ້ກາຍ 15 ມິຖຸນາ 2019.

(5) ຖ້າຂະແໜງການ ແລະ ທ້ອງຖິ່ນໃດຫາກສົ່ງເອກະສານບໍ່ທັນຕາມກໍານົດເວລາຂອງການປະເມີນ ເພື່ອພິຈາລະນາເຂົ້າແຜນ ປະຈໍາປີ 2020 ແມ່ນຈະໄດ້ພິຈາລະນາເລື່ອນໃນການນໍາສະເໜີໃນປີຕໍ່ໄປ, ຂະແໜງປະເມີນຈະແຈ້ງບັນຊີໂຄງການທີ່ຜ່ານການປະເມີນພ້ອມເອກະສານທີ່ກ່ຽວຂ້ອງກັບໂຄງການໃຫ້ພາກສ່ວນເຈົ້າຂອງໂຄງການ ເພື່ອຄົ້ນຄວ້າພິຈາລະນານໍາສະເໜີການນໍາແຕ່ລະຂັ້ນ ເພື່ອພິຈາລະນາເຂົ້າແຜນຕາມທີ່ກໍານົດໄວ້ໃນກົດໝາຍ ແລະ ລະບຽບການຊຶ່ງບັນດາເອກກະສານທີ່ຂັດຕິດປະກອບດ້ວຍ: ບົດສຶກສາຄວາມເປັນໄປໄດ້ໂຄງການ, ບົດສະເໜີໂຄງການ, ບົດວິພາກເສດຖະກິດ-ເຕັກນິກໂຄງການ, ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ແລະ ໃບໂອນກໍາມະສິດນໍາໃຊ້ທີ່ດິນ ເພື່ອສາທາລະນະປະໂຫຍດ ໃນກໍລະນີທີ່ມີການນໍາໃຊ້ທີ່ດິນຂອງປະຊາຊົນ (ລາຍລະອຽດໃຫ້ປະຕິບັດຕາມກົດໝາຍ ມາດຕາ 22 ຂອງກົດໝາຍການລົງທຶນລັດ).

(6) ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ຫັນບັນດາໂຄງການພັດທະນາຂອງຕົນລົງສູ່ເມືອງ ແລະ ບ້ານພັດທະນາຫຼາຍຂຶ້ນ ເພື່ອເຮັດໃຫ້ໄປຕາມທິດການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຕິດພັນກັບການຫັນແຂວງເປັນຫົວໜ່ວຍຍຸດທະສາດ, ຫັນເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ຫັນບ້ານເປັນຫົວໜ່ວຍ

ພັດທະນາ ແລະ ສອດຄ່ອງກັບທິດການພັດທະນາຂອງນະຄອນຫຼວງວຽງຈັນ ແລະ ແຂວງ ທີ່ອີງໃສ່ຄວາມເຂັ້ມແຂງ ແລະ ທ່າແຮງທີ່ມີໃນທ້ອງຖິ່ນຕົນໃຫ້ເກີດປະໂຫຍດສູງສຸດ.

(7) ຈຸດສຸມໃນການນຳໃຊ້ທຶນງົບປະມານຂອງລັດ ປະຈຳປີ 2020 ແມ່ນໃຫ້ແຕ່ລະຂະແໜງການ ແລະ ທ້ອງຖິ່ນ ເອົາໃຈໃສ່ ດັ່ງນີ້: ❶ ໂຄງການທີ່ມີແຈ້ງການຂອງລັດຖະບານໃຫ້ພິຈາລະນາຄົ້ນຄວ້າເຂົ້າແຜນ; ❷ ໂຄງການສົມທົບທຶນທາງການເພື່ອການພັດທະນາ ທີ່ມີສັນຍາໃນການສົມທົບທຶນກັບອົງການຜູ້ໃຫ້ທຶນ ແລະ ມີການຢັ້ງຢືນຈາກຜ່ານກົມຮ່ວມມືສາກົນ ກະຊວງແຜນການ ແລະ ການລົງທຶນ; ❸ ບັນດາໂຄງການໜີ້ສິນໂຄງການລົງທຶນຂອງລັດ ເພື່ອເຮັດໃຫ້ຈຳນວນໜີ້ສິນຂອງຂະແໜງການ ແລະ ທ້ອງຖິ່ນຫຼຸດລົງເທື່ອລະກ້າວ; ❹ ໂຄງການສືບຕໍ່ຂອງຂະແໜງການ ແລະ ທ້ອງຖິ່ນຕົນ ເພື່ອເຮັດໃຫ້ສຳເລັດ ແລະ ນຳໃຊ້ເຂົ້າໃນການຜະ ລິດ ຊຸກຍູ້ການພັດທະນາໂດຍໄວ ແລະ ❺ ໂຄງການສະເໜີໃໝ່ແມ່ນໂຄງການທີ່ມີຄວາມຈຳເປັນຮີບດ່ວນແທ້, ໂຄງການຕິດພັນກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການພັດທະນາຊາຍແດນ ແລະ ໂຄງການພັດທະນາຊົນນະບົດ ແກ້ໄຂຄວາມທຸກຍາກຂອງປະຊາຊົນ ສ່ວນການກໍ່ສ້າງຫ້ອງການສຳນັກງານ ແລະ ການກໍ່ສ້າງພື້ນຖານໂຄງລ່າງອື່ນ ແມ່ນໃຫ້ເລື່ອນໄປຈົນໝົດໄລຍະຂອງແຜນ 5 ປີຄັ້ງທີ VIII (2016-2020) ແຕ່ຖ້າມີຄວາມຈຳເປັນໃນການຈັດຕັ້ງປະຕິບັດແທ້ ແມ່ນໃຫ້ນຳສະເໜີລັດຖະບານພິຈາລະນາເປັນລາຍໂຄງການ.

(8) ຂະແໜງການ ແລະ ທ້ອງຖິ່ນ ຄົ້ນຄວ້າຮ່າງແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນການລົງທຶນຂອງລັດ ແລະ ຊ່ວຍເຫຼືອຈາກຕ່າງປະເທດ (ຕາມຂັ້ນຕອນ ແລະ ເອກະສານທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ) ປະຈຳປີ 2020 ສົ່ງໃຫ້ກະຊວງແຜນການ ແລະ ການລົງທຶນພາຍໃນວັນທີ 15 ກໍລະກົດ 2019 ເພື່ອຄົ້ນຄວ້ານຳສະເໜີລັດຖະບານ ແລະ ສະພາແຫ່ງຊາດຮັບຮອງ.

ເມື່ອບັນດາຂະແໜງການ ແລະ ທ້ອງຖິ່ນໄດ້ຮັບບົດແນະນຳສະບັບນີ້ແລ້ວ ຈົ່ງເອົາໃຈໃສ່ຜັນຂະຫຍາຍ ແລະ ຮີບຮ້ອນເຜີຍແຜ່ເນື້ອໃນຈິດໃຈດັ່ງກ່າວເປັນອັນລະອຽດ ໂດຍໃຫ້ກົມກອງ, ພະແນກການ ແລະ ໜ່ວຍງານຕ່າງໆ ທີ່ຂຶ້ນກັບຄວາມຮັບຜິດຊອບ, ຂອບເຂດສິດ, ໜ້າທີ່ ແລະ ພາລະບົດບາດຂອງຕົນ ຈັດຕັ້ງປະຕິບັດດ້ວຍຄວາມເປັນເຈົ້າການ ແລະ ຮັບຜິດຊອບສູງ.

**ລັດຖະມົນຕີ**

ປອ ສຸພັນ ແກ້ວມີໄຊ